# ກຸ່ມຊາດພັນ ໃນຕຳນານພະຍາເຈືອງ 16

**ອະຣຸນຣັດ ວິຊຽນຂຽວ**

## ຄັມພີຕຳນານພະຍາເຈືອງ

ຕຳນານພະຍາເຈືອງ ຫລືມະຫານິທານພະຍາເຈືອງ[1] ສະບັບວັດເໜືອງໝໍ້ ອຳເພີຣ້ອງກວາງ ຈັງຫວັດແພ່ ມີຈຳນວນ 11 ຜູກ ຈຳນວນໃບລານ 449 ໃບລານ ແຕ່ລະໃບລານມີ 5 ແຖວ ໃນຕອນທ້າຍຜູກທີ 6 ລະບຸວ່າ ໄດ້ມາຈາກຫລວງພະບາງ *"ໜ້າທັບເຄົ້າພະຍາເຈືອງ ເອົາລຸກເມືອງຫລວງພະບາງແລ ເຈົ້າເຮີຍ"* ຄັດລອກ ເມື່ອ ພ.ສ. 2437 ມີຜູ້ຄັດລອກຫລາຍຄົນ ຜູກແຣກ ພຣະພິກຂຸຄັນທາ ແຫ່ງວັດເໜືອງໝໍ້ເປັນຜູ້ຄັດລອກ ສ່ວນທີ່ເຫລືອອີກ 10 ຜູກ ຄັດລອກໂດຍນ້ອຍວາດ ຄັດລອກຂະນະເປັນສາມະເນນ ນາມວ່າພຣະອະຣິນທາ ຊົມພູ ຊຶ່ງຄັດລອກຕາມບັນຊາຂອງ ພຣະພິກຂຸຄັນທາ ແຫ່ງວັດເໜືອງໝໍ້ ໃຊ້ເວລາທຳງານປະມານ 3 ເດືອນເສດ ຈຶ່ງສຳເລັດຈົບບໍລິບູນ

ວິທີການຂຽນຕຳນານພະຍາເຈືອງເລື່ອງນີ້ ເປັນການຂຽນນຳດ້ວຍພາສາບາລີ ແລ້ວແປເປັນພາສາໄທ ເປັນປະໂຍກຮຽກວ່າ "ນິສສັຍ" ພາສາບາລີທີ່ຂຽນເປັນລັກສະນະບາລີທ້ອງຖິ່ນ ມີຄຳຫຼາຍຄຳທີ່ຜູ້ຄັດລອກ ຊຶ່ງເປັນສາມະເນນ ຄັດລອກຜິດ ຫລືບໍ່ແຕກສານກ່ຽວກັບພາສາບາລີ ພົບຄຳບາລີບາງຄຳອ່ານບໍ່ເຂົ້າໃຈ ຫລືຂຽນບໍ່ຖືກຕ້ອງຕາມໄວຍາກອນ ຕຳນານພະຍາເຈືອງທີ່ມີສຳນວນ ແລະ ເນື້ອຫາເໝືອນກັບສະບັບນີ້ ເປັນຂອງວັດໃນເມືອງແພ່ ຄືຕຳນານພະຍາເຈືອງສະບັບວັດກາງ ອຳເພີສອງ ຈັງຫວັດແພ່

---

[1] ມະຫານິທານພະຍາເຈືອງສະບັບນີ້ ອາຈານສິງຄະ ວັນນະສັຍ ໄດ້ສຳຫລວດຄຳພີໃບລານ ຮ່ວມກັບ ສ.ດຣ. ຮາຣັນ ຮຸນດິອຸສ (Harald Hundius) ແຫ່ງມະຫາວິທະຍາໄລພັຊເຊົາ (University of Passau) ປະເທດສະຫະພັນສາທາລະນະລັດ ເຢຍຣະມັນ ເມື່ອປະມານ ພ.ສ. 2515 ອາຈານສິງຄະ ໄດ້ຢືມຄຳພີຊຸດນີ້ມາຈາກວັດເໜືອງໝໍ້ ເພື່ອຖ່າຍໄມໂຄຼຟິມ ຊຶ່ງປັດຈຸບັນເກັບໄວ້ທີ່ ສະຖາບັນວິຈັຍສັງຄົມ ແລະຫໍສະໝຸດແຫ່ງຊາດກຸງເທບ ຕໍ່ມາ ພ.ສ. 2523 ດຣ. ອານັນ ການຈົນພັນ ແລະ ຜູ້ຂຽນ ໄດ້ຂໍຢືມຕຳນານພະຍາເຈືອງຈາກວັດເໜືອງໝໍ້ມາປະລິວັດ ໂດຍພໍ່ໜານ ສີທົນ ຄຳແປງ ແລະ ຜູ້ຂຽນຊ່ວຍກັນປະລິວັດ ສ. ປະເສີດ ນະ ນະຄອນ ກະລຸນາຊ່ວຍກວດທານ ແລະເປັນທີ່ປຶກສາ ຕຳນານພະຍາເຈືອງ ເຜີຍແຜ່ເມື່ອ ພ.ສ. 2524 ໃນໜັງສືປະລິວັດຈາກຄຳພີໃບລານຊຸດຕຳນານເມືອງ ແລະ ກົດໝາຍ ວິທະຍາລັຍຄູຊຽງໃໝ່ (ອັດສຳເນົາ) ມູນນິທິໂຕໂຍຕ້າ ສະໜັບສະໜຸນການທຳງານຄັ້ງນັ້ນ ຈຶ່ງຂໍຂອບພະຄຸນໄວ້ນະໂອກາດນີ້ດ້ວຍ

ຈຳນວນ 11 ຜູກ ຈຳນວນ 421 ໃບລານ (ປັດຈຸບັນອັດສຳເນົາໄມໂຄຼຟິມ ເກັບໄວ້ທີ່ສະຖາບັນ ວິຈັຍສັງຄົມ ມະຫາວິທະຍາໄລຊຽງໃໝ່)

ຕຳນານພະຍາເຈືອງສະບັບນີ້ ເມື່ອປຽບທຽບກັບນິສັຍບາເຈືອງ ສະບັບທີ່ພຣະອະຣິຍານຸວັດ ໄດ້ປະຣິວັດ ເປັນສຳນວນດຽວກັນ ແຕ່ນິສັຍບາເຈືອງພາສາບາລີຖືກຕ້ອງກວ່າ[2] ມີຜູ້ໃຫ້ຄວາມເຫັນວ່າ ຈາກສຳນວນ ພາສາໃນຕຳນານພະຍາເຈືອງ ໜ້າຈະແຕ່ງໃນລ້ານຊ້າງ (ທະວັຊ ປຸນໂຍທົກ 2535) ແຕ່ ອາຈານປຣະຄອງ ນິມມານເຫມິນ ເຫັນວ່າ ຕຳນານພະຍາເຈືອງໜ້າຈະແຕ່ງໃນລ້ານນາ[3] ແລ້ວມີຜູ້ນຳໄປເຜີຍແຜ່ໃນລ້ານ ຊ້າງ ແລະ ຕໍ່ມາມີຜູ້ນຳກັບມາຍັງລ້ານນາອີກ ແລະ ໜ້າຈະແຕ່ງຫລັງຈາກ ມະຫາກາບເລື່ອງທ້າວບາເຈືອງ ໂດຍອາດຈະນຳເລື່ອງລາວຈາກ ມະຫາກາບທ້າວບາເຈືອງ ມາຂຽນໃໝ່ເປັນອີກສຳນວນນຶ່ງ ຊຶ່ງຍັງຫາ ຂໍ້ຍຸຕິບໍ່ໄດ້ ຄົງຕ້ອງມີການສຶກສາຄົ້ນຄວ້າເລື່ອງນີ້ຕໍ່ໄປ

ຫລັງຈາກທີ່ຜູ້ຂຽນໄດ້ອ່ານຢ່າງພິນິດພິຈາລະນາ ທັງເນື້ອເລື່ອງ ແລະ ລາຍລະອຽດອີກຄັ້ງນຶ່ງ ຜູ້ຂຽນ ເຫັນດ້ວຍກັບຂໍ້ສະເໜີຂອງ ອາຈານປຣະຄອງ ທີ່ວ່າ ຕຳນານພະຍາເຈືອງສະບັບວັດເໜືອງໝໍ້ ອາດຈະແຕ່ງ ໃນລ້ານນາມາກ່ອນ ແລ້ວໄປເຜີຍແຜ່ໃນຫລວງພະບາງ ແລ້ວນຳກັບມາວັດເໜືອງໝໍ້ ທັງນີ້ໄດ້ພົບວ່າ ນອກເໜືອຈາກຜູ້ແຕ່ງຈະກ່າວເຖິງພະຍາລໍຈັກກະຣາຊ ວ່າເປັນຂອງພວກຕົນແລ້ວ ຍັງພົບວ່າຜູ້ແຕ່ງໄດ້ກ່າວ ເຖິງເມືອງເງິນຍາງ ໂດຍເພີ່ມຄຳວ່າ *"ຊຽງໃໝ່" "ສຣີຊຽງ ໃໝ່" ແລະ "ນົພບຸຣີ".* ລົງໄປດ້ວຍຫລາຍແຫ່ງ ທຳໃຫ້ສັນນິຖານໄດ້ວ່າ ຜູ້ແຕ່ງຕຳນານອາດຈະຜູກພັນກັບເມືອງຊຽງໃໝ່ ຫລືອາດຈະແຕ່ງທີ່ເມືອງຊຽງໃໝ່ ຫລືອາດຈະແຕ່ງໃນສະໄມທີ່ຊຽງໃໝ່ ເປັນສູນກາງຂອງແຄວ້ນລ້ານນາ ຢ່າງໃດຢ່າງນຶ່ງກໍອາດເປັນໄດ້ ດັ່ງຕົວຢ່າງ *"ເມືອງເງິນຍາງ ປຸຣານຊົນ ປຸຣິສັງຂາໂຕ ອັນກ່າວຄືວ່າ <u>ເມືອງບຸຣານຊັຍນົພບຸຣີຊຽງໃໝ່</u>*

---

[2] ປຣະຄອງ ນິມມານເຫມິນ 2541 ໜ້າ 109

[3] ປຣະຄອງ ນິມມານເຫມິນ ມີຄວາມເຫັນວ່າ ຕຳນານພະຍາເຈືອງໜ້າຈະແຕ່ງໃນລ້ານນານັ້ນ ໂດຍພິຈາລະນາຈາກ ຫລັກຖານ ດັ່ງນີ້ 1. ເນື້ອຄວາມຕອນຕົ້ນກ່າວວ່າ *"ພະຍາລະວະຈັກກະເທວະຣາຊແຫ່ງເຮົາທັງຫລາຍ"* ສະແດງເຖິງ ຄວາມຜູກພັນຂອງຜູ້ແຕ່ງກັບປະຖົມກະສັດແຫ່ງອານາຈັກເງິນຍາງ 2. ຖ້ອຍຄຳພາສາທີ່ໃຊ້ ແມ້ຈະຄ້າຍຄືກັບພາສາ ທີ່ໃຊ້ໃນຫລວງພະບາງແດ່ ແຕ່ສ່ວນໃຫຍ່ ທັງຄຳນາມ ຄຳສັບພະນາມ ຄຳກິລິຍາ ຄຳເຊື່ອມ ແລະ ຄຳລົງທ້າຍ ຄ້າຍຄື ກັບພາສາຖິ່ນທີ່ໃຊ້ໃນລ້ານນາ 3. ມີຄຳໂຄງທີ່ແຊກໃນຕຳນານພະຍາເຈືອງ 2 ບົດ ມີລັກສະນະເປັນໂຄງສີ່ແບບລ້ານນາ (ດູເພີ່ມໃນ ປຣະຄອງ ນິມມານເຫມິນ "ພຸດທະສາສະໜາກັບມະຫາກາບທ້າວບາເຈືອງ ແລະ ຕຳນານພະຍາເຈືອງ" ໃນສະຖາບັນໄທຄະດີສຶກສາ ຕຳນານກ່ຽວກັບທ້າວຮຸ່ງທ້າວເຈືອງ ມິຕິທາງປະວັດສາດ ແລະວັດທະນະທັມ ໜ້າ 101-114)

*ສະມັຕໂຕ ກໍແລ້ວ"*[4] *"ອັນວ່າພະຍາເຈືອງ ອັນພະຍາລຸງຊຶ່ມຫາກໄປຣາທະນາມາ ນິພພປຸຣສັມປໂຕ ອັນມາຮອດ<u>ເມືອງເງິນຍາງ ນິພບຸຣີສຣີຊຽງໃໝ່</u> ດ້ວຍຍົດສັກບໍລິວານອັນມາກ"*[5] *"ອັນວ່ານາຍເມືອງ ກໍກ່າວວ່າ ຜູ້ຂ້າໄຫວ້ນາງເມືອງເຈົ້າ ອັນວ່າລູກແຫ່ງພຣະເທວີເຈົ້າ ກັບທັງໂຄດເຄົ້າໝູ່ວົງສາ ໂຍທາແລໄພ່ນ້ອຍ ອັນໄປເຖິງ<u>ເມືອງເງິນຍາງສຣີຊຽງໃໝ່</u>"*[6] *"ພະຍາເຈືອງນັ້ນ ຖີໂຕ ອັນຕັ້ງຢູ່ນິພພປຸເຣ ໃນ<u>ເມືອງສຣີຊຽງໃໝ່</u>"*

## ເລື່ອງຫຍໍ້ ມະຫາບົທານພະຍາເຈືອງ

**ຜູກທີນຶ່ງ** ກ່າວວ່າພະຍາເຈືອງເປັນໂອລົດຂອງພະຍາຈອມຣາຊ ແຫ່ງເມືອງໄຊນະຄອນ ຫລື ເມືອງອ້າຊາຍ ພະມານດານາມວ່ານາງຈອມເມືອງ ພະຍາເຈືອງມີພະເຊດຖາພະອົງນຶ່ງ ຊຶ່ງຕໍ່ມາ ພະຣາຊບິດາໄດ້ແຕ່ງຕັ້ງໃຫ້ປົກຄອງເມືອງອ້າຊາຍ ແລະ ແຕ່ງຕັ້ງໃຫ້ພະຍາເຈືອງ ຫລື ພະຍາຍີ່ເຈືອງຣຸນ ເປັນອຸປະຣາດແສນເມືອງ ພະຍາເຈືອງຊົງມີຊ້າງຄູ່ບາລະມີ ມີຊື່ຊ້າງພານຄຳ ມີພະສະຫາຍ ຊື່ແອງຄອນ ມີພະເຈົ້າລຸງຊື່ພະຍາລຸງຊຶ່ມ ປົກຄອງເມືອງເງິນຍາງ ຊຶ່ງພະເຈົ້າລຸງ ມີທິດາສອງພະອົງ ຄືນາງອົງຄາເມືອງ ແລະ ນາງອາມຄາຍຈັນທອມ ແລະ ມີພະເຈົ້າປ້າປົກຄອງເມືອງຊຽງເຄືອ ມີທິດາ ຊື່ນາງງອມມອນ ຊຶ່ງຕໍ່ມາໄດ້ເປັນພະຊາຍາຂອງພະຍາເຈືອງ

**ຜູກທີສອງ** ມີເມືອງຢູ່ເມືອງນຶ່ງ ຄືເມືອງປະກັນ (ແກວ) ມີພະຍາປົກຄອງຊື່ ພະຍາກວາ ຊຶ່ງມີທິດາຊື່ນາງອົກແກ້ວ (ອູບແກ້ວ) ພະຍາກວາມີພະເຈົ້າຫລານຊື່ ແອງກາ ເປັນເຈົ້າເມືອງຍອດນ້ຳໂຮງຫີນ ແອງກາເປັນຄົນໜຸ່ມຕ້ອງການຈະສົມລົດກັບທິດາຂອງພະຍາຊຶ່ມເມືອງເງິນຍາງ ໄດ້ຈັດສິ່ງເຄື່ອງບັນນາການມາຖວາຍ ແລະ ສູ່ຂໍທິດາພະຍາຊຶ່ມເຖິງສາມຄັ້ງ ແຕ່ພະຍາຊຶ່ມປະຕິເສດ ເຮັດໃຫ້ພະຍາກວາ ແລະ ແອງກາບໍ່ພໍໃຈຫລາຍ ປະມານ ພ.ສ. 1648 ພະຍາກວາ ແລະ ແອງກາ ຍົກກອງທັບມາຕີເມືອງເງິນຍາງຂອງພະຍາຊຶ່ມ ເມືອງເງິນຍາງຈຶ່ງໄດ້ໄປຂໍຄວາມຊ່ວຍເຫລືອຈາກພະຍາເຈືອງ ໃຫ້ມາຊ່ວຍທຳເສິກສົງຄາມຄັ້ງນີ້

---

[4] ອະຣຸນຣັຕ ວິຊຽນຂຽວ ແລະ ສີທົນ ຄຳແປງ ຕຳນານພະຍາເຈືອງ ຜູກ 1. ໜ້າ 21

[5] ເລື່ອງດຽວກັນ. ຜູກ 8. ໜ້າ 71.

[6] ເລື່ອງດຽວກັນ. ໜ້າ 79.

**ຜູກທີສາມ** ພະຍາເຈືອງໄດ້ໄປຊ່ວຍພະຍາຊຶ່ມ ຜູ້ເປັນລຸງຂອງຕົນ ທຳເສິກສົງຄາມ ໄດ້ໄປເມືອງຊຽງເຄືອ ແຈ້ງຂ່າວແກ່ນາງງອມມອບຊາຍາໃຫ້ຊາບ ທາງດ້ານເມືອງຊຽງເຄືອ ໄດ້ທຳພິທີສູ່ຂວັນພະຍາເຈືອງ ແລະ ສະໜັບສະໜຸນທາງດ້ານກອງທັບຊ່ວຍພະຍາເຈືອງຮົບດ້ວຍ ໂດຍມອບ ຊ້າງ ມ້າ ດາບຢ່າງລະ 20 ແລະ ໄພ່ພົນອີກ 15.000 ຄົນ ແລ້ວເດີນທາງໄປເມືອງເງິນຍາງ

**ຜູກທີສີ່** ເມື່ອໄປເຖິງເມືອງເງິນຍາງແລ້ວ ພະຍາເຈືອງໃຫ້ເສນາເດີນທາງລ່ວງໜ້າໄປແຈ້ງໃຫ້ພະຍາຊຶ່ມຊາບ ການສະເດັດມາຂອງພະອົງ ພະຍາລຸງຊຶ່ມໄດ້ໃຫ້ການຕ້ອນຮັບຢ່າງດີ ການທຳສົງຄາມຄັ້ງນີ້ພະຍາເຈືອງໄດ້ຈັດກອງທັບເປັນສີ່ເຫລົ່າ ຄື ເສນາຊ້າງ ເສນາມ້າ ເສນາລົດ ແລະພົນເດີນເທົ້າ ການແຕ່ງຕົວໄດ້ກຳໜົດໃຫ້ທັງສີ່ໝູ່ ແຕ່ງຕົວຕ່າງສີກັນ ໂດຍໃຫ້ສວມເສື້ອຜ້າ ແລະ ໝວກ ສີຂຽວ ສີເຫລືອງ ແດງ ແລະ ຂາວຕາມລຳດັບ ພະຍາເຈືອງໄດ້ທົງເຄື່ອງຢ່າງງົດງາມໃນການອອກເສິກຄັ້ງນີ້ ໃນການທຳເສິກຜົນປະກົດວ່າພະຍາກວາປະຣາຊັຍ ແລະ ສິ້ນພະຊົນໃນສົງຄາມ

**ຜູກທີຫ້າ** ພະຍາເຈືອງບໍ່ໄດ້ຂ້າແອງກາຜູ້ເປັນຫລານຂອງພະຍາກວາ ແຕ່ໄດ້ໃຫ້ແອງກາ ດື່ມນ້ຳສາບານ ແລະ ຖວາຍສັດປະຕິຍານຕໍ່ພະອົງ ແລ້ວຊົງໃຫ້ແອງກາໄປປົກຄອງເມືອງເດີມ ເພື່ອເປັນການຕອບແທນພະຍາເຈືອງ ໃນການທຳເສິກສົງຄາມຄັ້ງນີ້ ພະຍາຊຶ່ມໄດ້ຍົກນາງອາມຄາຍຈັນທອມ ໃຫ້ເປັນຊາຍາຂອງພະຍາເຈືອງ ແລະ ມີການສະເລີມສະລອງຊັຍຊະນະໃນເມືອງເງິນຍາງ ຕໍ່ມາພະຍາເຈືອງ ໄດ້ເດີນທາງຈາກເງິນຍາງໄປເມືອງປະກັນ ເດີນທາງຜ່ານແມ່ນ້ຳຂອງ ໄປພົບພວກຂ້າ ຫລື ທະມິນະ ຄົນພວກນີ້ໄດ້ຖວາຍເຄື່ອງບັນນາການພະຍາເຈືອງ ພະອົງຖືວ່າຂ້າທັງຫລາຍເປັນກຳລັງຂອງ ພະອົງ

**ຜູກທີຫົກ** ພະຍາເຈືອງເດີນທາງມາເຖິງເມືອງປະກັນ ນາງກວາ ຊາຍາພະຍາກວາ ໃຫ້ນາງອູບແກ້ວທິດາອອກມາຕ້ອນຮັບ ແລະ ຖວາຍເຄື່ອງບັນນາການ ແລະ ຍອມອ່ອນນ້ອມຕໍ່ພະຍາເຈືອງ ພະຍາເຈືອງໄດ້ປະທັບທີ່ເມືອງປະກັນລະຍະນຶ່ງ ໂດຍມີນາງອູບແກ້ວເປັນຊາຍາຂອງພະອົງ ພະຍາເມືອງວິເທຣາຊໄດ້ສົ່ງເຄື່ອງບັນນາການມາຈະເລີນໄມຕີ ພະຍາເຈືອງຢູ່ເມືອງປະກັນຕໍ່ມາ ໄດ້ແຕ່ງຕັ້ງໃຫ້ອາວກວາງ ເປັນເຈົ້າເມືອງປະກັນສືບຕໍ່ມາ ພະຍາເຈືອງໄດ້ໃຫ້ໂອວາດສັ່ງສອນອາວກວາງ

**ຜູກທີເຈັດ** ຫລັງຈາກນັ້ນ ພະຍາເຈືອງໄດ້ສະເດັດກັບເມືອງເງິນຍາງ ພ້ອມດ້ວຍນາງອູບແກ້ວ ຊາຍາກ່ອນຈາກມາ ພະອົງໄດ້ກ່າວສັ່ງສອນແນວທາງປະຕິບັດໃນການປົກຄອງບ້ານເມືອງ ແກ່ອາວກວາງຫລາຍປະການ

**ຜູກທີແປດ** ພະຍາເຈືອງໄດ້ກ່າວສັ່ງສອນໃນຫົວຂໍ້ຫລາຍປະການ ເຊັ່ນ ອັບປະຫານິຍະທັມ 7 ປະການ ພະຣາຊປະຕິຍານຂອງກະສັດ ແລະຣາຊຈາຣິດ ໆລໆ ແລ້ວຈຶ່ງສະເດັດໄປເມືອງເງິນຍາງ ເດີນທາງຜ່ານເມືອງສຸວັນນະພູມ ແລະ ເມືອງຕ່າງໆ ທ້າວພະຍາເມືອງເຫລົ່ານີ້ໄດ້ນຳເຄື່ອງບັນນາການມາຖວາຍເປັນຈຳນວນມາກ ແລະ ຍອມອ່ອນນ້ອມຕໍ່ພະຍາເຈືອງ ເມື່ອພະອົງເດີນທາງໄປເຖິງເມືອງເງິນຍາງແລ້ວ ພະຍາຊຶ່ມໃຫ້ການຕ້ອນຮັບເປັນຢ່າງດີ ພະຍາເຈືອງປະທັບທີ່ເມືອງເງິນຍາງ ພ້ອມທັງເທວີທັງສາມພະອົງ ພະຍາເຈືອງໄດ້ແຕ່ງຕັ້ງໃຫ້ທານພາຍ ຜູ້ເປັນນ້າ ໄປປົກຄອງເມືອງລ້ານຊ້າງ ແຕ່ຕັ້ງໃຫ້ແອງກອນ ເປັນອຸປະຣາດເມືອງເງິນຍາງຊຽງໃໝ່ ສຳຫລັບເມືອງຕ່າງໆ ທີ່ມາສະຫວາມິພັກ ໄດ້ກຳໜົດໃຫ້ທຸກເມືອງສົ່ງດອກໄມ້ເງິນ ແລະ ຄຳທຸກປີ ພະຍາເຈືອງໄດ້ລະລຶກເຖິງ ນາງງອມມອນ ຈຶ່ງໃຫ້ເສນາອາມາດໄປເຊີນມາຍັງເມືອງເງິນຍາງ ແລະ ເສນາໄດ້ໄປກາບທູນໃຫ້ພະມານດາຂອງພະຍາເຈືອງຊາບ ເຖິງກິລະນິຍະກິດຂອງພະອົງດ້ວຍ

**ຜູກທີເກົ້າ** ພະມານດາຂອງພະຍາເຈືອງ ໄດ້ໃຫ້ເສນາອາມາດນຳເຄື່ອງບັນນາການໄປຍັງເມືອງຊຽງເຄືອ ປະທານໃຫ້ນາງງອມມອນ ແລະ ເຊີນພະນາງສະເດັດໄປເມືອງເງິນຍາງ ພະມານດາຂອງນາງງອມມອນໄດ້ກ່າວໂອວາດສັ່ງສອນນາງງອມມອນ ໃນເລື່ອງການຄອງເຮືອນ ຫລັງຈາກນັ້ນ ທັງສາມພະອົງ ຄືພະມານດາຂອງພະຍາເຈືອງ ພະມານດານາງງອມມອນ ແລະ ນາງງອມມອນ ໄດ້ເດີນທາງໄປເມືອງເງິນຍາງ ຊຶ່ງພະຊາຍາຂອງພະຍາເຈືອງທັງສາມພະອົງ ຕ່າງກໍຕ້ອນຮັບນາງງອມມອນຢ່າງດີ ພະຍາເຈືອງໄດ້ແຕ່ງຕັ້ງໃຫ້ພະມານດາ ໄປປົກຄອງເມືອງປະກັນ

**ຜູກທີສິບ** ພະຣາຊມານດາໄດ້ໃຫ້ໂອວາດສັ່ງສອນແກ່ພະຍາເຈືອງ ແລ້ວສະເດັດໄປປົກຄອງເມືອງປະກັນ ພະຍາເຈືອງລະລຶກເຖິງແອງກາ ແລະ ຄຳສັ່ງສອນທີ່ໃຫ້ແກ່ແອງກາ ກ່ອນໄປປົກຄອງເມືອງຍອດນ້ຳໂຮງຫີນ ພະເຊດຖາຂອງພະຍາເຈືອງສິ້ນພະຊົນ ພະຍາເຈືອງກໍໄດ້ປົກຄອງບ້ານເມືອງຄືເມືອງອ້າຊາຍສືບຕໍ່ມາ ພະຍາເຈືອງມີຣາຊບຸດຫລາຍພະອົງ ຣາຊບຸດຊື່ຮຸ່ງຣາຊກຸມານ ອັນປະສູຕແຕ່ນາງງອມມອນ ໄດ້ໄປປົກຄອງເມືອງຊຽງເຄືອ ຣາຊບຸດທີ່ປະສູຕຈາກນາງອູບແກ້ວສອງອົງ ໄປປົກຄອງເມືອງປະກັນ ແລະ ຣາຊບຸດອົງສຸດທ້າຍຂອງນາງອູບແກ້ວ ໄປປົກຄອງເມືອງຊຽງຮຸ່ງ ພະຍາເຈືອງປົກຄອງເມືອງເງິນຍາງໄດ້ 25 ປີ ອາຍຸໄດ້ 80 ປີ ຈຶ່ງສະຫວັນນະຄົດທີ່ເມືອງປະກັນ ຣາຊບຸດທັງສອງໄດ້ນຳອັດຖິມາປະດິດສະຖານທີ່ເມືອງເງິນຍາງ ຊື່ສຽງຂອງພະຍາເຈືອງ ປະກົດໄປທົ່ວ ທຸກແຄວ້ນ

**ຜູກທີສິບເອັດ** ພະຍາວິເທຫະຣາຊ ໄດ້ສົ່ງຣາຊທູຕໄປຈະເລີນຣາຊໄມຕີກັບພະຍາເຈືອງ ໃນສະໄມນັ້ນ ມີເມືອງເມືອງນຶ່ງຊື່ ເມຣຸນະຄອນ ມີພະຍາເມຣຸຣາຊເປັນເຈົ້າເມືອງ ມີທິດາອົງນຶ່ງມີຄວາມງາມຫຼາຍ ພະຍາເຈືອງມີພະປະສົງຈະໄດ້ນາງເປັນຊາຍາ ຈຶ່ງໄດ້ສົ່ງຣາຊບັນນາການໄປຖວາຍ ແລະ ທູນຂໍນາງ ຈາກພະຍາເມຣຸຣາຊ ພະຍາເມຣຸຣາຊບໍ່ພໍໃຈຫລາຍ ແລະ ຕອບປະຕິເສດ ພະຍາເຈືອງຈຶ່ງຈະທຳສົງຄາມດ້ວຍ ພະຍາເມຣຸຣາຊຈຶ່ງຂໍກຳລັງຈາກເມືອງມິຖິລາ ຊຶ່ງມີພະຍາຟ້າຮ່ວນເປັນເຈົ້າເມືອງ ແລະ ເປັນພະບິດາຂອງພະອົງ ໃນການທຳເສິກສົງຄາມຄັ້ງນີ້ ພະຍາເຈືອງເສຽໄຊ ແລະສິ້ນພະຊົນໃນສົງຄາມ ເມືອງເງິນຍາງຈຶ່ງຕົກເປັນເມືອງຂຶ້ນຂອງພະຍາຟ້າຮ່ວນ ໂດຍຈະຕ້ອງສົ່ງສ່ວຍເຂົ້າປີລະ 1.000 ຫາບ ໃນຕອນທ້າຍຂອງເລື່ອງກ່າວວ່າ ໃນອະດີດຊາດ ພະຍາເຈືອງໄດ້ຖວາຍນ້ຳເຜີ້ງແດ່ພະປັຈເຈກພຸດທະເຈົ້າ ດ້ວຍຜົນບຸນດັ່ງກ່າວ ຈຶ່ງໄດ້ມາເກີດເປັນພະຍາໃນຊາດນີ້[7]

ໃນບົດຄວາມນີ້ ຜູ້ຂຽນຂໍກ່າວເຖິງກຸ່ມຊາດພັນກຸ່ມຕ່າງໆ ທີ່ຜູ້ແຕ່ງຕຳນານພະຍາເຈືອງກ່າວເຖິງ ຊຶ່ງອາດຈະຊ່ວຍໃຫ້ເຫັນເຖິງກຸ່ມຄົນຫລາຍກຸ່ມທີ່ຕັ້ງຖິ່ນຖານເປັນບ້ານເມືອງ ແລະ ມີຄວາມສຳພັນກັນທັງເຄືອຍາດ ແລະ ສົງຄາມ ຕຳນານພະຍາເຈືອງກ່າວເຖິງປະເພນີວັດທະນະທັມຂອງແຕ່ລະຊາດພັນໄວ້ຢ່າງໜ້າສົນໃຈ ທັງມະຫາກາບທ້າວບາເຈືອງ ແລະ ຕຳນານພະຍາເຈືອງ ຊຶ່ງມີຄວາມແຕກຕ່າງກັນໄປຕາມພື້ນຖານ ແລະ ປະຣິບົດທາງວັດທະນະທັມຂອງຜູ້ແຕ່ງພາຍໃຕ້ເຄົ້າໂຄງເລື່ອງ ດຽວກັນ ດັ່ງນີ້ :

---

[7] ກະລຸນາເບິ່ງລາຍລະອຽດຕຳນານພະຍາເຈືອງກ່ຽວກັບເລື່ອງຕໍ່ໄປນີ້ 1. ພິທີກະທຳເລົ່າເຂົ້າຂວັນ 2. ປະເພນີກິນກ່ຽວກິນດອງ 3. ເທວະດາອາຮັກຫລັກເມືອງ ດ້ຳດີຜີພໍ່ 4. ຄຳສັ່ງສອນຂອງພະຍາເຈືອງ 5. ລັກສະນະຍິງທີ່ດີ 6. ກອງທັບ 7. ເມືອງມະຫານະຄອນ ແລະເມືອງນ້ອຍ 8. ຖານະ ແລະບົດບາດຜູ້ຍິງ 9. ການລະຫລິ້ນ 10. ສຳນວນພາສາ ໃນ ອະຣຸນຣັຕ ວິຊຽນຂຽວ "ມະຫານິທານພະຍາເຈືອງ ສະບັບວັດເໜືອງໝໍ້ ຈັງຫວັດແພ່" ໃນ ຕຳນານກ່ຽວກັບທ້າວຮຸ່ງທ້າວເຈືອງ: ມິຕິທາງປະວັດສາດ ແລະວັດທະນະທັມ. ພິມເນື່ອງໃນໂອກາດສະຫລອງພຣະຊົນມາຍຸ ຄົບ 72 ພັນສາ ສົມເດັດພຣະເຈົ້າພີ່ນາງເທີ ເຈົ້າຟ້າກັນລະຍານິວັດທະນາ ກົມຫລວງນະຣາທິວາດຣາຊນະຄະຣິນ 6 ພຶດສະພາຄົມ 2538. ກຸງເທບ ສະຖາບັນໄທຄະດີສຶກສາ 2541

# ກຸ່ມຊາດພັນ ໃນຕຳນານພະຍາເຈືອງ

## 1. ໄທຍວນ/ລະວາ

ບໍ່ພົບຄຳວ່າ ຍວນ ຫລືໂຍນົກ ໃນຕຳນານພະຍາເຈືອງ ຜູ້ແຕ່ງບໍ່ກ່າວເຖິງຊາດພັນຂອງພະຍາເຈືອງ ແຕ່ກ່າວວ່າ ເມືອງເງິນຍາງເປັນສູນກາງຂອງອຳນາດຂອງພະຍາເຈືອງ ເມືອງເງິນຍາງ ເປັນເມືອງທີ່ປູ່ເຈົ້າລາວຈົກ ຫລືພະຍາລະວາຈັກກະຣາຊ ສະຖາປະນາບໍລິເວນທີ່ຮາບລຸ່ມແມ່ນ້ຳກົກ ແມ່ນ້ຳແມ່ລະວ້າ (ແມ່ສາຍ) ແລະດອຍຕຸງ ເຂດຈັງຫວັດຊຽງຣາຍ ນັກບູຮານຄະດີເຊື່ອວ່າ ເມືອງເງິນຍາງ ຕັ້ງຢູ່ລະຫວ່າງແມ່ນ້ຳແມ່ສາຍ ກັບດອຍຕຸງ ແມ່ນ້ຳແມ່ສາຍ ຕຳນານຮຽກວ່າ "ນ້ຳແມ່ລະວ້າ" ຫລືແມ່ນ້ຳຂອງຊາວລະວ້າ/ລົວະ ສະພາບເມືອງເງິນຍາງ *"ມີແນວກຳແພງບາງສ່ວນເຫລືອຢູ່ ແລະ ຄູເມືອງທີ່ແຫ້ງຂອດ ກຳແພງບາງສ່ວນຖືກທຳລາຍ ເມືອງຕັ້ງຢູ່ບົນທີ່ສູງໃກ້ແມ່ນ້ຳແມ່ສາຍ ໃນເຂດທີ່ຮຽກວ່າ ໂປ່ງແດງ ຫລື ເໝືອງແດງ ມີຄວາມພະຍາຍາມຄາດໄຖແນວດິນໃຫ້ທະລາຍລົງ ເພື່ອເປັນພື້ນທີ່ປູກພືດໄຮ່ຕະຫລອດເວລາ"*[8] ຕຳນານອະທິບາຍວ່າ ເມືອງເງິນຍາງມາຈາກຄຳວ່າ ເງິນຍັງ (ຢູ່) ຫລືຂັ້ນໄດເງິນທີ່ພະຍາລະວາຈັກກະຣາຊ ໄຕ່ລົງມາຈາກສະຫວັນ ແຕ່ພົບວ່າ ຄຳວ່າ "ຍາງ" ໃນສະໄໝນັ້ນ ໝາຍເຖິງປ່າໄມ້ ແລະຄຳວ່າ "ເງິນ" ໝາຍເຖິງສີຂາວ ຫລືທີ່ຮຽກວ່າ "ຫິຣັນນະຄອນ" ພະຍາລະວາຈັກກະຣາຊ ໄດ້ບູຊາພະທາດດອຍຕຸງທຸກປີ ແລະ ໃຫ້ທັມມິລະ/ລົວະ ຢູ່ຮັກສາພະທາດ ດອຍຕຸງ 500 ຄົນ

ປູ່ເຈົ້າລາວຈົກເປັນລົວະທີ່ຕຳນານລ້ານນາກ່າວວ່າມີຈົກ ຫລືຈອບຈຳນວນຫລາຍ ອາດຈະເປັນໄປໄດ້ທີ່ວ່າ ພະຍາລະວາຈັກກະຣາຊ ແລະ ປູ່ເຈົ້າລາວຈົກ ເປັນບັນພະບຸລຸດຂອງພະຍາເຈືອງ ເປັນພວກດຽວກັນ ຄືເປັນລົວະ ຫລືລະວ້າ ຊຶ່ງອາດຈະໝາຍຣວມວ່າ ພະຍາມັງລາຍກໍເປັນລົວະດ້ວຍ ເມື່ອພະຍາລາງຄຽງເມືອສ້າງເມືອງຍາງສາຍ ໃຫ້ຝັງເສົາອິນທະຂິລໄວ້ກາງເມືອງ ຊຶ່ງເສົາອິນທະຂິລ ຕຳນານວ່າເປັນເສົາທີ່ພະອິນມອບໃຫ້ແກ່ລົວະ ເມືອງຊຽງໃໝ່ກໍຝັງເສົາອິນທະຂິລໄວ້ກາງເມືອງເຊັ່ນກັນ ແລະ ມີພິທີເສັ້ນໄຫວ້ຈົນເຖິງປັດຈຸບັນ ຕຳນານພະຍາເຈືອງຂຽນເຖິງລົວະວ່າ ພວກແກວພະກັນໜີໄປເພິ່ງລົວະ ເມື່ອກອງທັບພະຍາເຈືອງຍົກໄປຕີເມືອງພະກັນ "ອັນວ່າແກວທັງຫລາຍບາງຜ່ອງ ອັນປະສູ່ປະເທດບ້ານເມືອງແຫ່ງຊາວລະວາແລ້ວແລເປັນຊາວລະວາ"[9] ຕຳນານລ້ານນາຂຽນເຖິງຄວາມສຳພັນລະຫວ່າງລົວະ ແລະ ໄທຍວນໄວ້ຫລາຍຕຳນານ

[8] ລົງເດຊ ຕຳນານປະວັດບູຮານລ້ານນາ 2528 ນ. 220-221

[9] ອະຣຸນຣັຕ ວິຊຽນຂຽວ ແລະ ສີທົນ ຄຳແປງ. ຕຳນານພະຍາເຈືອງ ຜູກ 2 ໜ້າ 13-14

ໃນຄຳບວງສວງຜີປູ່ ແລະ ຍ່າ ແລະ ຜີລົວະ ທີ່ຊາວຊຽງໃໝ່ເສັ້ນໄຫວ້ດ້ວຍຄວາຍທຸກປີ ມີຂໍ້ຄວາມທີ່ບວງສວງວ່າ *"ລົວະເຍຽະໄຮ່ ຍ່າທີ້ຕາຍຄາ ໄທເຍຽະນາ ຍ່າທີ້ຕາຍແດດ"* ນອກຈາກນີ້ ລົວະເຄີຍຊ່ວຍເຫລືອຄົນໄທຍວນໃຫ້ພົ້ນຈາກອ້າເສີກສັດຕູທີ່ຕິດຕາມຫາຄົນໄທຍວນ ໂດຍໃຫ້ລົວະແຕ່ງຕົວເໝືອນໄທຍວນ ໄທຍວນຕັດຜົມເໝືອນລົວະ ເພື່ອມິໃຫ້ສັດຕູຮູ້ຈັກ *"ມູນລະໄທຕັດຜົມເໝືອນລົວະ ລົວະນຸ່ງຜ້າເໝືອນໄທເກີດນີ້ແລ"* ແລະ *"ລົວະປົງໄທ ໄທປົງໝົ້ນີ້ງ"*[10] ປະເສີດ ນະ ນະຄອນ ສະເໜີວ່າ ເມືອງຂອງທ້າວເຈືອງຄືເມືອງຊຽງຣາຍ ຫລືເມືອງພະເຢົາ ຫລືເມືອງຝາງ[11] ຊຶ່ງເປັນບ້ານເມືອງຂອງພະຍາລົວະຈັກກະຣາຊ ຊຶ່ງອາດຈະເປັນລົວະ ຫລືໄທຍວນກໍໄດ້ ແຕ່ປ້າຂອງຂຸນເຈືອງເປັນເມັງ ຫລືມອນ ທ້າວເຈືອງຈຶ່ງເປັນ ທັງໄທ/ລົວະ ແລະມອນເຊັ່ນດຽວກັບພະຍາມັງລາຍ ພະມານດາເປັນຊາວໄທລື້ທີ່ເມືອງຊຽງຮຸ່ງ ເລື່ອງຊາດພັນທີ່ຜູ້ແຕ່ງຕຳນານພະຍາເຈືອງກ່າວໄວ້ ຍັງຫາຂໍ້ຍຸຕິບໍ່ໄດ້ ຕ້ອງສຶກສາຄົ້ນຄວ້າຕໍ່ໄປ

## 2. ຂ່າ / ທັມມິລລະ

ຕຳນານພະຍາເຈືອງສະບັບວັດເໜືອງໝ້ ກ່າວວ່າ ເມື່ອພະຍາເຈືອງໄດ້ຮັບຊາບວ່າ ພະຍາກວາເມືອງແກວພະກັນ ຍົກທັບມາລ້ອມເມືອງເງິນຍາງຂອງລຸງຊຶ່ມ ລຸງຊຶ່ມຂໍໃຫ້ພະຍາເຈືອງໄປຊ່ວຍຂັບໄລ່ທຳສົງຄາມກັບພະຍາກວາ ພະຍາເຈືອງອອກເດີນທາງຈາກເມືອງຊຽງເຄືອ ມາເມືອງເງິນຍາງ ພະຍາເຈືອງຕ້ອງພັກຄ້າງແຮມລະຫວ່າງເດີນທາງ 2 ຄືນ ພະຍາເຈືອງພົບກັບຊົນເຜົ່າທີ່ຕຳນານຂຽນວ່າ "ຂ່າ/ຂ້າ" ພາສາບາລີໃຊ້ຄຳວ່າ "ທັມມິລລະ" ຊຶ່ງພົບທົ່ວໄປໃນຕຳນານ ແລະ ຈາລຶກໃນລ້ານນາ ພະຍາເຈືອງເດີນທາງຂ້າມນ້ຳ ແລະ ລຳຫ້ວຍມາເຖິງຫາດຫົວຊົນ ໃກ້ກັບເຊີງພູເຂົາ ແລະຢຸດພັກລະຫວ່າງທາງທີ່ປະທັບພັກແຮມຮຽກວ່າ *"ໂຮງກວ້ານຈອດ"* ຊຶ່ງພວກຂ່າໄດ້ສ້າງ *"ໂຮງກວ້ານຈອດອັນໃຫຍ່ ທັມມິລກຸຕໍ ອັນຂ່າທັງຫລາຍປູກແປງໄວ້"*[12] ຕຳນານຂຽນວ່າ ພວກຂ່າທີ່ນີ້ແຕ່ງກາຍດ້ວຍກາງເກງທີ່ເກົ່າ ແລະຂາດ ພວກເຂົານຳເອົາເນື້ອສັດ ຄືກະຈ້ອນ ແລະກະແຕ ພວກຂ່າຈຳນວນຫລາຍຈະຊ່ວຍພະຍາເຈືອງທຳສົງຄາມກັບທ້າວກວາ ພະຍາເຈືອງມອບຣາງວັນເປັນເສື້ອຜ້າ ແລະ ຕຸ້ມຫູ ໃຫ້ແກ່ຂ່າ

---

[10] ສະງວນ ໂຊຕິສຸຂຣັຕ ຕຳນານສຸວັນນະຄຳແດງ (ຫລືຕຳນານເສົາອິນທະຂິລ) ໜ້າ 145-146

[11] ປຣະເສີດ ນະ ນະຄອນ "ສັກກະຣາຊ ແລະພູມສາດຂອງທ້າວຮຸ່ງທ້າວເຈືອງ" ໃນ ຕຳນານກ່ຽວກັບທ້າວຮຸ່ງທ້າວເຈືອງ ມິຕິທາງປະຫວັດສາດ ແລະວັດທະນະທັມ ໜ້າ 21-26

[12] ອະຣຸນຣັຕ ວິຊຽນຂຽວ ແລະ ສີທົນ ຄຳແປງ. ຕຳນານພະຍາເຈືອງ ຜູກທີ 1 ໜ້າ 83

> ສັມເພທັມມິລາ ອັນວ່າຂ່າທັງມວນ ທຸນິວັຕຖາ ອັນນຸ່ງຍັງກະຕ່ຽວອັນເກົ່າ ອັນຂາດ ຄາຫາເວຕວາ ຍັງຂ່າທັງຫລາຍທີ່ຖືເອົາຍັງອາຫານທັງຫລາຍ ໝາຍມີກະຈອນກະແຕເປັນຕົ້ນ ກໍນ້ອມຖວາຍ ແກ່ເຈົ້າອຸປຣາຊເຈືອງລຸນ ອັນປະກອບດ້ວຍຣູບໂສມໂນມພັນອັນງາມຍິ່ງ ເຕທັມມິລາ ອັນວ່າຂ່າທັງຫລາຍ ຝູງນັ້ນ ກໍຕ້ານຈາລະຈາກັບວ່າ ດູລາຊາວເຮົາທັງຫລາຍ ຄວນແລ ອັນວ່າເຮົາທັງຫລາຍ ອັນໃຫ້ຍັດໃຫ້ອານ ຍັງເຄື່ອງອາວຸດທັງຫລາຍ ມີຫອກ ດາບ ເປັນຕົ້ນແລ ເຮົາທັງຫລາຍນັ້ນ ທັມມິລາ ອັນເປັນຊາວຂ່າ ອັນຫລາຍກວ່າໝື່ນກວ່າແສນ ອັນແກ້ວຫານຍິ່ງ ກໍຈັກໄປດ້ວຍກັບເຈົ້າ (ເຈືອງ) ແຫ່ງເຮົາ ໃນກາລະບັດນີ້ແທ້ດີຫລີ ໃນກາລະຍາມນັ້ນ ອັນວ່າອຸປຣາຊເຈືອງລຸນ ເປັນອັນຊົມຊື່ນຍິນດີ ກໍຍັງຄົນທັງຫລາຍ ຍັງຣາຊຫານຣາງວັນທັງຫລາຍ ໝາຍມີກະຕ່ຽວ ແລະ ເສື້ອ ແລະກະຈອນຫູເປັນຕົ້ນ ແກ່ຂ່າ ທັງຫລາຍຝູງນັ້ນ"[13]

ເມື່ອພະຍາເຈືອງເດີນທາງຈາກທີ່ຮຽກວ່າ "ພູທຸມ" ອີກ 1 ວັນ ມາເຖິງແມ່ນ້ຳແຫ່ງນຶ່ງ ກໍພັກຄ້າງຄືນທີ່ນັ້ນ ພະຍາເຈືອງໄດ້ພົບກັບຊາວຂ່າອີກກຸ່ມນຶ່ງ ມີຫົວໜ້າຊື່ວ່າ "ອ້າຍງຳ" ໄດ້ນຳເອົາບັນນາການມາຖວາຍພະຍາເຈືອງ ພະຍາເຈືອງຈຶ່ງຖາມວ່າ ຈາກທີ່ນີ້ໄປເມືອງເງິນຍາງໄກຫລາຍນ້ອຍເທົ່າໃດ ຂ່າຕອບວ່າ ຈາກທີ່ນີ້ໄປເມືອງເງິນຍາງໃຊ້ເວລາ 1 ວັນ

> "ອັນວ່າຂ່າທັງຫລາຍຝູງນັ້ນກໍກ່າວຂ້າທູນວ່າ ເທວະ ຝູງຂ້າໄຫວ້ບາດມະຫາຣາຊເປັນເຈົ້າ ອັນວ່າຝູງຂ້າທັງຫລາຍ ອັນໄປປ່າຍາງຄົນຄອນສູ່ເມືອງເງິນຍາງ ແຕ່ນີ້ອັນຂ້າມແລ້ວ ກໍສ້ຽງວັນຄ່ຳກໍຈຶ່ງໄປຮອດໄປເຖິງກໍຂ້າແລ"[14]

---

[13] ອະຣຸນຣັຕ ວິຊຽນຂຽວ ແລະສີຫົນ ຄຳແປງ. ຕຳນານພະຍາເຈືອງ ຜູກ 1 ໜ້າ 84

[14] ເລື່ອງດຽວກັນ. ຜູກ 1 ໜ້າ 85

ເມື່ອພະຍາເຈືອງໄດ້ເປັນພະຍາໃນເມືອງເງິນຍາງ ແລະ ໄດ້ທິດາສອງຄົນຂອງພະຍາຊື່ມເປັນຊາຍາແລ້ວ ພະຍາເຈືອງຈະໄປເມືອງພະກັນ ຈຶ່ງສັ່ງໃຫ້ຕຽມຍົກກອງທັບໄປເມືອງພະກັນ ໃນການເດີນທາງ ພະຍາເຈືອງອ້າມແມ່ນ້ຳຂອງ ຫລືແມ່ນ້ຳໂຂງໄປຝັ່ງປະເທດລາວປັດຈຸບັນ ຜູ້ແຕ່ງຕຳນານກ່າວວ່າ ພະຍາເຈືອງຜ່ານເຊີງເຂົາໄປພົບໝູ່ບ້ານທັມມິລະ ຫລືໝູ່ບ້ານຂ່າ ຊຶ່ງພວກເຂົາສ້າງບ້ານກ້ອງລ່າງສູງ ແລະ ຕັ້ງຖິ່ນຖານທີ່ແຫ່ງນີ້ມານານແລ້ວ ຕັ້ງແຕ່ອະດີດ

> ອັນວ່າພະຍາເຈືອງຕົນນັ້ນ ອັນອ້າມລ່ວງຍັງເມືອງຊຽງລານ ຄືວ່າເມືອງເງິນຍາງ ໄປຣອດໄປເຖິງມະຫານະທີຍັງແມ່ນ້ຳໃຫຍ່ ຮຽກຊື່ວ່າ <u>ນ້ຳຂອງ</u> ລ້ຳແມ່ນ້ຳໃຫຍ່ທັງ 5 ແລະ ແມ່ນ້ຳອັນນັ້ນຊື່ວ່າ ຍະມຸນາສະມຸດທອນ ອັນນຶ່ງແລ ... ແມ່ນອັນວ່າໝູ່ຣິພົນມະຫົນໂຍທາທັງຫລາຍ ອັນອ້າມທີ່ຍັງແມ່ນ້ຳໄປຣອດໄປເຖິງແລ້ວ ຍັງຝັ່ງກ້ຳພຸ້ນ ອັນພາຍໜ້າ ດ້ວຍທາງຕີນດອຍຈຶ່ງໄປຣອດໄປເຖິງ <u>ທັມມິລຄາມ</u> ຍັງ<u>ບ້ານຂ່າ</u>ທັງຫລາຍແລ ອັນວ່າພູແລ ອັນອາກຽນເດຽລະດາດ ເຕັມໄປດ້ວຍຍາວເຮືອນທັງຫລາຍອັນສູງ ອັນວ່າ<u>ຂ່າ</u>ທັງຫລາຍອັນມາກ ກໍຢູ່ໃນພູແລທີ່ນັ້ນແຕ່ບູຮານມາ[15]

ຕໍ່ມາພະຍາເຈືອງພົບກັບຊາວຂ່າອີກກຸ່ມນຶ່ງ ມີຫົວໜ້າຊື່ວ່າ ອ້າຍສາມເທັງ ຊຶ່ງເຂົາຊັກຊວນໃຫ້ຂ່າທັງຫລາຍນັບຖືພະຍາເຈືອງ ພວກເຂົານຳເອົານົກ ແລະ ເນື້ອສັດມາຖວາຍ ພະຍາເຈືອງມອບຜ້າສຳຫລັບນຸ່ງ ແລະ ຜ້າຫົ່ມລວມທັງໝາກ ແລະ ເກືອ ຊຶ່ງເປັນຂອງຫາຍາກໃນໝູ່ບ້ານຂ່າແຫ່ງນີ້ ພະຍາເຈືອງແຕ່ງຕັ້ງຍົດສັກໃຫ້ກັບຂ່າໃນໝູ່ບ້ານ ແລະ ຖືວ່າຂ່າເປັນກຳລັງຂອງພະຍາເຈືອງ

> ອັນວ່າ<u>ຂ່າ</u>ຜູ້ຊື່ວ່າ ອ້າຍສາມເທງ ປະໂຫລມໂລມເອົາ ແມ່ນຍັງ<u>ຂ່າ</u>ທັງຫລາຍມວນ ສຳແດງຍັງອານຸພາບບຸນສົມພານແຫ່ງພະຍາເຈືອງຕົນເປັນເຈົ້າແຫ່ງຕົນຍັງຂ່າທັງມວນ ກໍຫື້ເລື່ອມໃສໃນເຈົ້າແຫ່ງຕົນແລ ອັນວ່າ<u>ທ້າວພະຍາຂ່າ</u>ທັງຫລາຍມວນ ຖືເອົາຍັງເນື້ອແລນົກທັງຫລາຍຖວາຍຍັງບັນນາການຂອງຝາກທັງຫລາຍແກ່ພະຍາເຈືອງ ... ຫື້ຍັງສິ່ງທັງຫລາຍ

---

[15] ເລື່ອງດຽວກັນ. ຜູກ 1 ໜ້າ 135

> ໝາຍມີຜ້ານຸ່ງແລຜ້າຫົ່ມ ເປັນຕົ້ນກໍດີ ຍັງວັດຖຸອັນໃດອັນນຶ່ງອັນຂ່າທັງຫລາຍຫາກເພິງໄດ້ຍາກ ອັນມີໝາກແລເກືອ ເປັນຕົ້ນ ກັບທັງທີ້ແລ້ວຍັງສຸທິສັກບາມມະສັກ ແກ່ຂ່າທັງຫລາຍຝູງນັ້ນແລ ພະຍາເຈືອງນັ້ນ ຖືເອົາທັມມິລເລ ຍັງຂ່າທັງຫລາຍ ເປັນກຳລັງແຫ່ງຕົນ[16]

ຕຳນານພະຍາເຈືອງຂຽນເຖິງຂ່າ ທີ່ຊ່ວຍພະຍາເຈືອງຮົບກັບແກວພະກັນ ກົງກັບຂໍ້ສັນນິຖານຂອງ ຈິດ ພູມສັກ ແມ່ນວ່າເຮົາບໍ່ອາດຈະສະຫລຸບໄດ້ແນ່ຊັດ ກ່ຽວກັບທະຫານໃນກອງທັບຂອງພະຍາເຈືອງ ແຕ່ຜູ້ແຕ່ງຕຳນານກໍໄດ້ຂຽນເລື່ອງນີ້ໄວ້ໃຫ້ພິຈາລະນາຄົ້ນຄວ້າຕໍ່ໄປ ຄວາມເຫັນຂອງ ຈິດ ພູມສັກ ມີດັ່ງນີ້

ຈິດ ອະທິບາຍວ່າ ພວກຂ່າ ເຊັ່ນ ຂ່າມຸ ຂ່າວ້າ ໃນປະເທດ ສປປ.ລາວ ຮຽກວ່າ ລາວເທິງ ສ່ວນພວກແມ້ວຢ້າວຫລໍຫລໍ ຮຽກວ່າ ລາວສູງ ພວກນີ້ເປັນພວກອາສັຍຢູ່ຕາມຕີນພູ ຫລືບົນຝັ່ງແມ່ນ້ຳ ເລິກເຂົ້າໄປໃນປ່າ ພວກນີ້ທຳກະສິກຳທີ່ຮຽກວ່າ "ເຮັດໄຮ່" ພາສາບາລີໃຊ້ຄຳວ່າ "ທັມມິລະ" ໃນທີ່ນີ້ໝາຍເຖິງພວກຂ່າ ຕຳນານລ້ານນາຫລາຍເລື່ອງ ຂຽນຊື່ກຸ່ມຊາດພັນດ້ວຍພາສາບາລີວ່າ ທັມມິລລະ ແລະອີກຊື່ນຶ່ງວ່າ "ມິລັກຂຸ" ຊຶ່ງໝາຍເຖິງລະວ້າ ຫລືລົວະ ສັນນິຖານວ່າຜູ້ແຕ່ງຕຳນານລ້ານນາ ອາດຈະໃຊ້ທັງສອງຄຳ ໝາຍເຖິງທັງລົວະ ແລະຂ່າ ກໍເປັນໄດ້ ເລື່ອງນີ້ຍັງຫາຂໍ້ຍຸຕິບໍ່ໄດ້ ສຳຫລັບຂ່າໃນລາວນັ້ນ ມີນັກວິຊາການລາວ ອາຈານສຸຂສະວ່າງ ໄດ້ສຶກສາວິຈັຍເລື່ອງຂ່າ ຫລື ຂະມຸໄວ້ແລ້ວ[17]

ນອກຈາກນີ້ ຈິດເຊື່ອວ່າ ການທີ່ກອງທັບພະຍາເຈືອງສາມາດຮົບຊະນະພວກແກວພະກັນ ແລະລ້ານຊ້າງໄດ້ ເນື່ອງມາຈາກດຳເນີນນະໂຍບາຍຜູກມິດກັບຊົນຊາດຂ່າ ຄືຊົນພື້ນເມືອງທີ່ມີຢູ່ຫລາຍໃນລາວ (ພາສາລາວ ຂ່າ ແປວ່າ ທາດ) ພະຍາເຈືອງຜູກມິດກັບຂ່າ ສາບານວ່າຈະເປັນຍາດພີ່ນ້ອງກັນ ໂດຍສະເພາະກັບພວກຂ່າພູສູງ (ເໜືອທົ່ງໄຫຫີນ) ການໄດ້ຮັບກຽດເທົ່າທຽມກັນ ທຳໃຫ້ຂ່ານັບຖືພະຍາເຈືອງຫລາຍ ແລະມີຂ່າທີ່ນັບຖືຜີພະຍາເຈືອງຢູ່ຈົນບັດນີ້ ແລະ ຍັງເຊື່ອວ່າ ພະຍາເຈືອງຈະມາກອບກູ້ຊົນຊາດຂ່າໃນອະນາຄົດ ເພາະເຫດນີ້ເອງ ນັກພົງສາວະດານບາງຄົນຄິດວ່າ ພະຍາເຈືອງ ເປັນກະສັດຂອງຊົນຊາດຂ່າ[18]

---

16 ອະຣຸນຣັຕ ວິຊຽນຂຽວ ແລະສີຫົນ ຄຳແປງ. ຕຳນານພະຍາເຈືອງ ຜູກ 1 ໜ້າ 139

17 ກະລຸນາເບິ່ງລາຍລະອຽດເພີ່ມ ໃນ Suksavang Simana and Elisabeth Preisig. Kmhmu Livelihood Farming the Forest.

18 ຈິດ ພູມສັກ ຄວາມເປັນມາຂອງຄຳສຍາມ ໄທ ລາວ ແລະຂອມ. ໜ້າ 124-125 236-245

### 3. ແກວ

ຕຳນານພະຍາເຈືອງກ່າວເຖິງກຸ່ມຊາດພັນທີ່ຕຳນານຮຽກວ່າ ແກວ ດຣ. ເດວິດ ວັຍອາຈ (David K. Wyatt) ສະເໜີວ່າ ແກວໝາຍເຖິງຫົ້ ຫລືດິນແດນຕອນເໜືອຂອງຫວຽດນາມ ຊຶ່ງກົງກັບຂໍ້ສະເໜີ ຂອງ ຈິດ ພູມສັກ ທີ່ສະເໜີວ່າ ແກວພະກັນ ຄື ຊາວເມືອງປັກກັນ ທາງທິດຕະເວັນອອກຂອງແມ່ນ້ຳດຳ ເໜືອເມືອງຮ່າໂນຍ ໃນປະເທດຫວຽດນາມ ສ່ວນ ທ່ານມະຫາສິລາ ວີຣະວົງສ໌ ທ່ານສະເໜີວ່າ ແກວພະກັນ ໝາຍເຖິງເມືອງຊຽງຂວາງ ທົ່ງໄຫຫີນ ຕຳນານພະຍາເຈືອງກ່າວວ່າ ພະຍາກວາ ຊຶ່ງທຳສົງຄາມພ່າຍແພ້ ແກ່ພະຍາເຈືອງນັ້ນ ເປັນໃຫຍ່ກວ່າຊາວແກວທັງຫລາຍ *"ອັນວ່າພະຍາກວາຕົນນັ້ນ ອັນເປັນເຈົ້າເປັນໃຫຍ່ແກ່ຊາວແກວທັງຫລາຍ"*[19]

ຕຳນານພະຍາເຈືອງ ກ່າວເຖິງຊາວແກວໃນເມືອງພະກັນວ່າ ເມື່ອພະຍາເຈືອງຍົກທັບມາລ້ອມເມືອງພະກັນ ນາງກວາຣາຊເທວີ (ນາງຜູ້ປົກຄອງເມືອງພະກັນ ສືບຕໍ່ຈາກພະຍາກວ່າທີ່ສິ້ນພະຊົນໃນການທຳສົງຄາມກັບພະຍາເຈືອງທີ່ເມືອງເງິນຍາງ) ໃຫ້ນາງອູບແກ້ວ ແລະ ຂຸນນາງ ນຳເຄື່ອງບັນນາການມາຖວາຍພະຍາເຈືອງ ພ້ອມກັບມອບບ້ານເມືອງ ແລະ ພະຍາເຈືອງໄດ້ນາງອູບແກ້ວເປັນຊາຍາ ໃນລະຫວ່າງທີ່ພະຍາເຈືອງຍົກທັບມາເຖິງເມືອງພະກັນນັ້ນ ຊາວເມືອງຜູ້ຊາຍ ໄດ້ໜີໄປຍັງເມືອງ ຫລືສະຖານທີ່ຕ່າງໆ ບາງຄົນກາຍເປັນໂຈນ ນັກບວດ ບາງຄົນໜີໄປຢູ່ກັບພວກລົວະ ຫລື ຊາວລະວ້າ ບ້າງເປັນຂໍທານ ແລະ ເປັນຂ້າທາດ ຮຽກວ່າ ຂ້າກອນມານິຕ

> ອັນວ່າຜູ້ຊາຍທັງຫລາຍ ບາງຜ່ອງເປັນພໍ່ຮ້າງພໍ່ໝ້າຍ ອັນວ່າຜູ້ຍິງທັງຫລາຍ ບາງຜ່ອງເປັນແມ່ຮ້າງແມ່ໝ້າຍ ອັນວ່າແກວທັງຫລາຍ ບາງຜ່ອງອັນເປັນລັກເປັນໂຈນຢູ່ໃນປ່າ ອັນວ່າແກວທັງຫລາຍ ບາງຜ່ອງ ອັນເຂົ້າໄປສູ່ໝູ່ນັກບວດແລ້ວແລ ບວດເປັນສໍຣະນະ ອັນວ່າແກວທັງຫລາຍ ບາງຜ່ອງອັນໄປສູ່ປະເທດບ້ານເມືອງແຫ່ງຍາດພີ່ນ້ອງ ອັນວ່າແກວທັງຫລາຍບາງຜ່ອງ ອັນໄປສູ່ປະເທດບ້ານເມືອງແຫ່ງຊາວລະວາ (ລົວະ) ແລ້ວແລ ເປັນຊາວລະວາ ອັນວ່າແກວ

---

[19] ອະຣຸນຣັຕ ວິຊຽນຂຽວ ແລະ ສີຫົນ ຄຳແປງ. ຕຳນານພະຍາເຈືອງ ຜູກ 1 ໜ້າ 104

> ທັງຫລາຍບາງຜ່ອງ ອັນຖືຫາບແກມຂ້າ ອັນວ່າແກວທັງຫລາຍບາງຜ່ອງ ອັນໄປກວ່າຜູ້ດຽວຂໍກິນ ອັນວ່າແກວທັງຫລາຍ ອັນເປັນຂ້າກອນມານິຕ[20]

ຕໍ່ມາພະຍາເຈືອງຈະສະເດັດຈາກເມືອງພະກັນ ກັບໄປຍັງເມືອງເງິນຍາງ ພະຍາເຈືອງກ່າວວ່າ ຊາວເມືອງພະກັນຮຽກວ່າຊາວແກວ ແລະ ເປັນເມືອງໃນອຳນາດຂອງພະອົງ ຊຶ່ງມີເມືອງເງິນຍາງ ເປັນສູນກາງ

> ອັນວ່າປະເທດບ້ານເມືອງອັນນີ້ກໍດີ ອັນເປັນທີ່ຢູ່ແຫ່ງຊາວແກວທັງຫລາຍ ເມືອງພະກັນເປັນຂອບແດນບ້ານເມືອງແຫ່ງກູ ເມືອງເງິນຍາງເພື່ອຕັ້ງໄວ້ ທີ້ເປັນເມືອງຣາຊທານີທີ່ຢູ່ແຫ່ງກູ ອັນວ່າທີ່ອັນນັ້ນ ອັນຕ້ອງຢູ່ໃນທ່າມກາງ ເໝືອນດັ່ງພະສຸຣິຍະພະອາທິດພໍທ່ຽງວັນ[21]

ຜູ້ແຕ່ງຕຳນານພື້ນເມືອງຊຽງໃໝ່ກ່າວວ່າ ເມືອງພະກັນ ຄືເມືອງແກວ

> "ພັ່ນດັ່ງ ລາວຊື່ນພີ່ເຈົ້າພະຍາຈອມຜາເຮືອງແລເປັນລຸງເຈົ້າພະຍາເຈືອງ ນັ້ນມີລູກຍິງຜູ້ 1 ຊື່ນາງອົ້ວຄຳຄອນເມືອງ ຂຶ້ນໃຫຍ່ເປັນສາວມີຮູບງາມ ລ້ອນຖ້ອນດ້ວຍອິຕຖີລັກຂະນະທັງມວນ ຄອນເລງແລແກ່ຕາ ລືຊາປາກົດ ໄປເຖິງທີ້ ເມືອງພະກັນຄືເມືອງແກວ (ວ່າ) ມີລູກສາວພະຍາລາວຜູ້ 1 ງາມນັກ ວ່າສັນນັ້ນ"[22]

ນອກຈາກນີ້ ໃນສະມັຍພະຍາໂລກະຣາຊ ປະມານ ພ.ສ. 1986 ພະອົງມອບໃຫ້ພະຣາຊມານດາ ຍົກກອງທັບໄປລ້ອມເມືອງແພ່ ເຈົ້າເມືອງແພ່ບໍ່ຍອມອ່ອນນ້ອມ ພະຣາຊມານດາຈຶ່ງໃຫ້ຫາຄົນມາທຳປືນ ໃນຂະນະນັ້ນມີຊາວແກວຄົນນຶ່ງເປັນຄົນຮູ້ວິທີທຳປືນຊື່ວ່າປານສົງຄາມ ມີຕຳແໜ່ງເປັນ ພັນລ່າມນາ ຜູ້ປ່າວປະກາດກ່ຽວກັບການທຳນາ *"ມະຫາເທວີເຈົ້າຈຶ່ງວ່າ ຜູ້ໃດຮູ້ວ່າປູ່ເຈົ້າທີ້ວ່າມາເທິວ່າອັ້ນ ຍັງມີແກວຜູ້ນຶ່ງຊື່ວ່າ*

[20] ເລື່ອງດຽວກັນ. ຜູກ 2 ໜ້າ 13-14

[21] ອະຣຸນຣັຕ ວິຊຽນຂຽວ ແລະ ສິທົນ ຄຳແປງ. ຜູກທີ 2 ໜ້າ 19

[22] ອະຣຸນຣັຕ ວິຊຽນຂຽວ ແລະ ເດວິດ ວັຍອາດ. ຕຳນານພື້ນເມືອງຊຽງໃໝ່ ໜ້າ 10

*ປານສິງຄາມ ເປັນພັນລ່າມມາໄຫວ້ມະຫາເທວີວ່າ ຂ້າຍັງຮູ້ແຕ່ງປູ່ເຈົ້າ (ປືນ) ແລວ່າ ອັ້ນ"* [23] ໃນປີ ພ.ສ. 2023 ລ້ານນາຖືກກອງທັບແກວມາຕີເມືອງຫລວງພະບາງ ຊາວລາວຮົບແກວ ແກວຂ້າມມາເຖິງແດນເມືອງນ່ານ "แกวມາຕົກເມືອງຊວາ ຊວາຮົບแกว แกวຂ້າມທີ່ເມືອງຊວາ ຈັກມາເຖິງສີມາແດນທີ່ເມືອງນ່ານ"[24]

ໃນປີ ພ.ສ. 2349 ພະເຈົ້າກາວິລະ ສັ່ງສອນລູກຫລານໃຫ້ມີຄວາມຊື່ສັດ ຕໍ່ພະມະຫາກະສັດ ທີ່ເມືອງກຸງເທບ ຫ້າມລູກຫລານເອົາບ້ານເມືອງລ້ານນາ ໄປເພິ່ງພາຊາວຕ່າງປະເທດ ຮວມທັງ "ແກວຢວນ" ໝາຍຄວາມວ່າສະໄມຣັດຕະນະໂກສິນ ຜູ້ແຕ່ງຕຳນານ ຫລືລ້ານນາ ຮຽກແກວວ່າຢວນ ຊຶ່ງຄົງໄດ້ຮັບອິດທິພົນຈາກກຸງເທບ

> ບຸກຄົນຜູ້ໃດ ຍັງມີໃຈໃຄ່ສະບົດ ຟື້ນກັບດ້ວຍພະມະຫາກະສັດເຈົ້າກຸງສຣີອະຍຸດທິຍາ ແລ້ວກໍຈັກເອົາຕົວແລບ້ານເມືອງໄປເພິ່ງເປັນຂ້າມ່ານ ຂ່າຫໍ້ ຂ່າຄຸລວາ ກາສີ ແກວຢວນ ດັ່ງອັ້ນກໍດີ ບຸກຄົນຜູ້ນັ້ນຄິດບ້ານ ຢ່າຫື້ເປືອງ ຄິດເມືອງຢ່າຫື້ໜ້າ ຫື້ວິບາດຈິບຫາຍຕາຍວາຍ"[25]

**4. ເມັງ/ມອນ**

ຕຳນານພະຍາເຈືອງກ່າວວ່າ ມານດາ ແລະປ້າ ຮວມທັງນາງງ້ອມມອນເປັນຊາວເມັງ ຊຶ່ງມີວັດທະນະທັມປະເພນີຂອງຕົນເອງ ໃນມະຫາກາບທ້າວຮຸ່ງທ້າວເຈືອງກ່າວວ່າ ນາງເມັງຮຽກຄ່າຕົວນາງງ້ອມມອນຈຳນວນຫລາຍ ທຳນອງວ່າຂາຍລູກຕົນເອງ ຊຶ່ງໃນຕຳນານພະຍາເຈືອງກ່າວແຕ່ພຽງວ່າ ມານດາ ປ້າ ແລະນາງງ້ອມມອນເປັນເມັງ ແລະ ຮຽກຄ່າສິນສອດຈາກພະຍາເຈືອງຫລາຍ ແລະ ພະຍາເຈືອງ ບໍ່ໄດ້ສົ່ງຄ່າສິນສອດມາໃຫ້ ໃນເລື່ອງມານດານາງງ້ອມມອນຮຳພຶງເຖິງລູກສາວຂອງນາງ ແລະ ຮຽກຄ່າສິນສອດ

---

[23] ເລື່ອງດຽວກັນ. ໜ້າ 84

[24] ເລື່ອງດຽວກັນ. ໜ້າ 102

[25] ເລື່ອງດຽວກັນ. ໜ້າ 186

ຫລືຄ່າຕົວນາງງ້ອມມອນດັ່ງນີ້ ທອງຄຳໜັກແສນນຶ່ງ (ໜ່ວຍ) ຂ້າຍິງຊາຍຢ່າງລະ 100 ຄົນ ຊ້າງ 100 ຕົວ ມ້າ 100 ຕົວ ແລະ ເສື້ອຜ້າອາພອນອື່ນໆອີກ

> ອັນວ່າລູກສາວແຫ່ງເຮົາ ອັນເຖິງອັນວັຍອັນຂຶ້ນໃຫຍ່ແລດູງາມ ໃນເມື່ອກະກຸນອັນນີ້ ອັນວ່າກິຣິຍາອັນລ້ຽງດູໄວ້ແກ່ບຸກຄົນອື່ນ ກໍບໍ່ມີແລ ອັນວ່າເຮົາປະກົດເຊິ່ງຫລານສິ່ງດຽວ ເໝືອນດັ່ງອິນພົມມາປາຍແດນບຸແບ່ງທີ່ນຶ່ງທີ່ດຽວນີ້ແລດ້ວຍມີແທ້ ອັນວ່າວົງສາແຫ່ງເຮົາ ອັນເປັນເຊື້ອກະສັດອັນໃຫຍ່ ອັນວ່າເຮົາທັງຫລາຍ ກໍຈຸ່ງໃສ່ໃຈ ອັນສົມອັນຄວນ ແກ່ກະສັດທັງ 2 ກໍ້າ ອັນວ່າລືຊາປະກົດດ້ວຍຍົດສັກສົມບັດແຫ່ງເຮົາກໍເພິງມີ ອັນວ່າ ນາງກະສັດ ອັນຄວນຄ່າໄວ້ໄດ້ແສນຄຳ ກັບທັງຂ້າຍິງຮ້ອຍ ຂ້າຊາຍຮ້ອຍນຶ່ງ ກັບທັງຊ້າງຮ້ອຍມ້າຮ້ອຍປະການນຶ່ງ ອັນວ່າວັດຖຸທັງຫລາຍຝູງອື່ນ ອັນມີເສື້ອຜ້າອາພອນເປັນຕົ້ນອັນບໍ່ອາດຈັກນັບໄດ້ ອາວາຫະວິວາມົງຄົນ ອັນວ່າແຕ່ງກ່ຽວແຕ່ງດອງທຳເລົ່າເອົ້າຂວັນແຫ່ງເຈົ້າທັງສອງ ກໍເພິງມີນາງເມືອງ (ຜູ້ແມ່) ຄາດຄ່າ (ລາຄາ) ນາງງ້ອມ ດັ່ງນີ້ແລ[26]

ຕຳນານພະຍາເຈືອງຂຽນເຖິງມານດານາງງ້ອມມອນທຸກຄັ້ງວ່າ "ນາງເມັງ" ດັ່ງຕົວຢ່າງ ນາງເມັງແຈກເສື້ອຜ້າໃຫ້ທະຫານທີ່ຈະໄປຊ່ວຍພະຍາເຈືອງທຳສົງຄາມກັບແກວເມືອງພະກັນ *"ອັນວ່ານາງເມັງຕົນເປັນແມ່ແຈກຍັງເສື້ອຜ້າອາພອນທັງມວນແກ່ໂຍທາທັງຫລາຍ ກໍກ່າວນາງງ້ອມວ່າ ດູລາລູກຮັກ ແມ່ ..."*[27] ແລະ ພະຍາເຈືອງໄປກາບຄາລະວະມານດານາງງ້ອມມອນຊຶ່ງເປັນປ້າ *"ອັນວ່າອຸປະຣາດ ເຈືອງລຸນລົງຈາກຄໍຊ້າງກໍເອົ້າໄປສູ່ປາງປະສາດຣາຊໂຮງຫລວງແຫ່ງ<u>ນາງເມັງຕົນເປັນປ້າ</u> (ແມ່ນາງ ງ້ອມມອນ)"*[28] (1/71)

---

[26] ອະຣຸນຣັຕ ວິຊຽນຂຽວ ແລະ ສີທົນ ຄຳແປງ. ຕຳນວນພະຍາເຈືອງ ຜູກ 1 ໜ້າ 24

[27] ເລື່ອງດຽວກັນ. ຜູກ 1 ໜ້າ 76.

[28] ເລື່ອງດຽວກັນ. ຜູກ 1 ໜ້າ 71.

ເມັງ[29] ເປັນຊື່ຮຽກກຸ່ມຊາດພັນກຸ່ມນຶ່ງໃນພາກເໜືອ ເຊື່ອກັນວ່າ "ເມັງ" ເປັນເຈົ້າຂອງວັດທະນະທັມເກົ່າແກ່ ຊຶ່ງໄດ້ສືບທອດມາເຖິງຄົນພາກເໜືອໃນສະມັຍຫລັງ ປັດຈຸບັນນີ້ຍັງມີຊົນກຸ່ມເມັງ ອາສັຍໃນຈັງຫວັດຕ່າງໆ ໂດຍສະເພາະຈັງຫວັດຊຽງໃໝ່ ແລະລຳພູນ "ເມັງ" ກຸ່ມນີ້ເປັນກຸ່ມທີ່ມີວິວັດທະນາການ ແລະມີປະວັດຄວາມເປັນມາ ວັດທະນະທັມ ປະເພນີ ແລະຄວາມເຊື່ອຂອງຕົນທີ່ແຕກຕ່າງໄປຈາກ ກຸ່ມຊົນອື່ນໆໃນພາກເໜືອ

ຄຳວ່າ "ເມັງ" ເປັນຄຳທີ່ຊາວເໜືອ ຫລືລ້ານນາຮຽກຊົນຊາດໃນຕະກຸນມອນ ແລະຂະເມນ ຈິຕ ພູມສັກເຊື່ອວ່າ "ເມັງ" ເປັນຄຳດຽວກັບຄຳວ່າ "ມອນ" ຄົນມອນບູຮານຮຽກຕົວເອງວ່າ "ເຣມອນ" (ຈາລຶກມອນ ພ.ສ. 2022) ຄົນໄທພາກກາງມາໃຊ້ທາງຮູບອັກສອນເປັນ "ຣາມັນ" ແຕ່ມອນອອກສຽງເປັນ ຣະມົນ ໃນເວລາຕໍ່ມາກ່ອນເປັນ ຫ-ມ່ອນ ໄທຈຶ່ງຮຽກຕາມປາກວ່າ ມອນ ສ່ວນພາກເໜືອຮັບເອົາຄຳວ່າ ເຣມອນ (ຣະເມນ) ໄປໃຊ້ ແຕ່ອອກສຽງຕາມລີ້ນຄົນລ້ານນາວ່າ "ເມັງ" ເພາະຄຳວ່າຄົນ ລ້ານນາຈະອອກສຽງ "ນູ" ສະກົດເປັນ "ງ" ເຊັ່ນເດືອນເພັນ ເປັນ ເດືອນ-ເປັງ ບຳເພັນ ເປັນ ປ້ຳເປັງ ບັນຊອນ ເປັນ ເບງຊອນ ຄຳວ່າເຣມອນ ຈຶ່ງອອກສຽງເປັນ "ຣເມງ" ຕໍ່ມາຫລໍລົງເຫລືອ "ເມງ" ເພາະບໍ່ມີສຽງ "ຣ" ໃນພາສາລ້ານນາ ດັ່ງນັ້ນຄຳວ່າ **ເມງ ມອນ ຣາມັນ ຣະເມນ** ຈຶ່ງເປັນຄຳດຽວກັນ ໝາຍເຖິງຊົນຊາດມອນບູຮານ ຊຶ່ງເອກະສານ ແລະ ໃນພາກເໜືອ ຮຽກວ່າ "ເມັງ"

ຈາກຫລັກຖານສິລາຈາລຶກ ແລະສິລະປະກັມທີ່ຂຸດພົບ ສັນນິຖານວ່າ ສູນກາງຂອງມອນບູຮານ ຫລືເມັງຢູ່ບໍລິເວນລຸ່ມນ້ຳເຈົ້າພະຍາ ຄືອານາຈັກທວາຣະວະດີໃນພຸດທະສັດຕະວັດ ທີ 12-13 ຊຶ່ງພົບສິລາຈາລຶກອັກສອນມອນທີ່ນະຄອນປະຖົມ ຣາຊບຸຣີ ອູ່ທອງ ແລະ ລົບບຸຣີ ຄວາມຈະເລີນຂອງເມັງ ຫລືມອນແບບທວາຣະວະດີ ໄດ້ຂະຫຍາຍຕົວໄປທາງພາກຕະວັນອອກສ່ຽງເໜືອ ແລະພາກເໜືອ ໄດ້ພົບສິລາຈາລຶກມອນທີ່ເມືອງຟ້າແດດສູງຍາງ ຈັງຫວັດກາລະສິນ ແລະ ທີ່ຫະຣິພຸນໄຊ ຫລືລຳພູນ ມີອາຍຸເກົ່າເຖິງພຸດທະສັດຕະວັດທີ 16 ແລະ ຕົ້ນພຸດທະສັດຕະວັດທີ 17 ຕໍ່ມາ ຄວາມຈະເລີນຂອງເມັງ ຫລືມອນ ຍ້າຍໄປມີສູນກາງທີ່ເມືອງສະເທີມໃນພະມ້າຕອນໃຕ້ ໃນລະຫວ່າງ ພຸດທະສັດຕະວັດທີ 16 ໃນການສຶກສາກ່ຽວກັບຊົນຊາດທີ່ຮຽກວ່າ "ເມັງ" ໃນພາກເໜືອນັ້ນ ອາດຈະພິຈາລະນາໄດ້ຈາກຂໍ້ມູນທັງທາງດ້ານວັນນະກັມ ສິລາຈາລຶກ ຕຳນານ ສິລະປະກັມ ບູຮານຄະດີ ແລະ ລາຍງານການວິຈັຍພໍສັງເຂບໄດ້ດັ່ງນີ້ :

[29] ເລື່ອງເມັງຕໍ່ໄປນີ້ຜູ້ຂຽນນຳມາຈາກບົດຄວາມເລື່ອງ "ເມັງ-ຊາດ" ໃນ ສາຣານຸກົມໄທສະບັບຣາຊບັນດິດຍະສະຖານ ຕອນ 454 ມູນນິດບັນກິດ-ເມ່ງຈື້, ພ.ສ. 2535, ໜ້າ 14948-14958.

"ເມັງ" ຈາກວັນນະກັມທ້າວຮຸ່ງ ຫລືເຈືອງ ສະບັບປະເທດລາວ ຊຶ່ງມະຫາສີລາ ວີຣະວົງສ໌ ແປ ທ້າວເຈືອງໃນວັນນະກັມເລື່ອງນີ້ເປັນວິລະບຸລຸດຂອງຊົນຫລາຍເຜົ່າ ເຊັ່ນ ລາວ ອີສານ ລ້ານນາ ແລະຊຽງຕຸງ ເຊື່ອວ່າທ້າວເຈືອງມີຊີວິດຢູ່ລະຫວ່າງ ພ.ສ. 1625-1705 ວັນນະກັມເລື່ອງນີ້ຂຽນເຖິງຄົນເມັງວ່າ ເມັງ ມອນ ແລະ ຂອມ ເປັນຊົນເຜົ່າດຽວກັນ ກ່າວຄື ພະຣາຊມານດາຂອງທ້າວເຈືອງ ເປັນມອນ ຊຶ່ງໃນໜັງສືທ້າວຮຸ່ງ ຫລືທ້າວເຈືອງຮຽກວ່າ "ເມັງ" ອານາເຂດຂອງເມືອງສວນຕານ ເມືອງຂອງພະຣາຊບິດາທ້າວເຈືອງ ຕິດຕໍ່ກັບເມືອງເມັງ ຫລືມອນ ດັ່ງໂຄງວ່າ "ບຸຣີເທົ້າ ເມືອງເມັງມະນຸດສະໂລກ" ປ້າຂອງຂຸນເຈືອງເປັນເມັງ ຫລືມອນ ລູກສາວຊຶ່ງຊື່ວ່ານາງງ້ອມ ກໍຮຽກວ່າ ນາງເມັງ ນາງມອນລູກເມັງ ແລະ ລູກຂອມດ້ວຍ ດັ່ງໂຄງວ່າ :

| | |
|---|---|
| ກາດ່ອງເນື້ອສາວເທສ | ນາງເມັງ |
| ມືບາຍແຫວນໃສ່ມື | ຄວນນິ້ວ |
| ບໍ່ລື່ນລ້ຳລາວເກົ່າ | ບູຮານ |
| ຄື ໆ ສຽງຄວ່າງພາຍກ່າວເມັງ | ນາງທ້າວ |
| ພຸ່ງພຸ່ງຂຶ້ນໂຮງຮາຊ | ນາງເມັງ |
| ອໍລະຊອນ ສຽງອາວພາຍກ່າວແທນ | ຖະແຫລງຖ້ອຍ |
| ເມື່ອນັ້ນນາງເມັງ ຜູ້ໃຈງາມ | ກອຍກ່າວ |
| ຖືວ່າບຸນເກື່ອນບ້າວຫຽມໃກ້ | ຮ່ວມສວນ |
| ຄືດັ່ງຫຍາດແຕ່ຟ້າສະເດັດທ່ອງ | ທໍລະນີ |
| ໂສມຄານຄວນຕາດເຈືອງ | ຫຽມທ້າວ |
| ນັກສະໜົມເນື້ອນາລີ | ຮຽງຮອບ |
| ກາກ່ອງກ້າວງາມລ້ຳ | ລູກຂອມ |
| ຊະພູ່ເນື້ອນາງງາມ | ງ້ອມມ່ວນ |
| ຜູ້ທີ່ອ້າງຜິວຜ້ຽນ | ລູກເມັງ |
| ໜັກໜິ່ນກັ້ນນອນແນບ | ນາງມອນ |
| ພໍຍາມຄາວຊົ່ວດີ | ດາວຊ້າຍ |
| ຄາມມະຣຸກຮ້ອງຄອນຄອນ | ຂ້ອນຮຸ່ງ |

| | |
|---|---|
| ເຈົ້າຍີ່ຍ້າຍຄືງລ້ອມ | ສັ່ງນາງ |

ພະຣາຊມານດາຂອງທ້າວເຈືອງ ສົ່ງທູດໄປຂໍນາງງ້ອມໃຫ້ທ້າວເຈືອງ ພະຣາຊມານດານາງງ້ອມ ຮຽກຄ່າສິນສອດແພງ ພະຣາຊມານດາທ້າວເຈືອງກ່າວຕຳນິວ່າ ພວກເມັງຄືພະຣາຊມານດາ ນາງງ້ອມມັກໄດ້ຂາຍລູກສາວ

| | |
|---|---|
| ຄົນຈັງໄຣຖືຄວາມ | ມັກໄດ້ |
| ຍາວ່າເມັງດາແຂ້ງຂາຍກັນ | ກິນຄ່າ |

ໃນການທຳພິທີລ້ຽງຜີບັນພະບຸລຸດ ຫລືຜີດ້ຳຂອງນາງງ້ອມ ໄດ້ກ່າວເຊີນຜີບັນພະບຸລຸດຂອງນາງງ້ອມ ມາກິນເຄື່ອງເສັ້ນຜີບັນພະບຸລຸດເມັງນີ້ ໄດ້ສືບທອດມາຈົນປັດຈຸບັນ

| | |
|---|---|
| ໝາກອ່ອນສ້ອມປະສົງໃສ່ | ພູຈວງ |
| ເທພິທຍຸບໃສ່ໄຄ | ເລີຍຈ້ຳ |
| ຂຸນຫລວງເຈົ້າເມືອງເມັງ | ເປັນໃຫຍ່ ມາກິນ |
| ສູຄ່ອຍຄ້ຳຄູນລູກ | ຍິງດຽວ ແດ່ເນີ້ |

ຈາກມະຫາກາບທ້າວຮຸ່ງທ້າວເຈືອງເຫັນວ່າ ໃນພຸດທະສັດຕະວັດທີ 17 ນັ້ນ ແຄວ້ນເງິນຍາງຂອງລ້ານນາໄດ້ມີຄວາມສຳພັນກັບເມັງ ຫລືມອນແລ້ວ ເພາະຕັ້ງແຕ່ແມ່ນ້ຳປີງຂຶ້ນໄປ ມີເມັງ ແລະ ລົວະ ຫລືລະວ້າຕັ້ງຖິ່ນຖານຢູ່ແລ້ວ ໂຄງນິຣາດຫະຣິພຸນໄຊ ຊຶ່ງເຊື່ອວ່າແຕ່ງຂຶ້ນລະຫວ່າງພຸດທະສັດຕະວັດທີ 21-22 ຂຽນເຖິງເມັງ ແລະ ມ່ານ ຄື ພະມ້າໄວ້

| | |
|---|---|
| ສຸຍາຣາມນິ່ງຫັ້ນ | ບຸນເລງ |
| ມີຮູບໄທມັງເມັງ | ມ່ານງ້ຽວ |
| ຖືລາດາບກັບເກງ | ສະກັບແກ່ນ ຄົນແຮ |
| ຊ້າງສວາດພັນເກົ້າກ້ຽວ | ແກວ່ນສູ້ສົງຄາມ |

ໂຄງມັງທະຣາຣົບຊຽງໃໝ່ ຊຶ່ງແຕ່ງຂຶ້ນປະມານ ພ.ສ. 2156 ຜູ້ແຕ່ງຮຽກຄົນມອນສະມັຍນັ້ນ ວ່າ "ເມັງ" ແລະຮຽກຄົນພະມ້າ ວ່າ "ມ່ານ"

| | |
|---|---|
| ເທົ່າເອົາເດັກນ້ອຍມ່ານ | ມວນເມັງ |
| ເປັນເສນາສົມເສງ | ຮ່ວມຮູ້ |
| ທະລຳເທດບໍ່ມີເພງ | ສັກສິ່ງ ສັງເອີຍ |
| ເມືອງຈິ່ງຈັກຫລົ້ມຫລູ້ | ເພື່ອທ້າວຕົນກາງ |

ຕຳນານສິງຫົນໂຍນົກຊັຍບຸຣີຊຽງແສນ ແລະ ຕຳນານສິງຫົນກຸມານ ສະບັບສອບຄົ້ນ ມີຂໍ້ຄວາມກົງກັນວ່າ ໃນສະມັຍພະເຈົ້າໄຊສິຣິ ຣາຊໂອລົດຂອງພະເຈົ້າພອນພູ້ມ ປະມານ ພ.ສ. 1547 ມີກະສັດຈາກເມືອງເມັງ ຍົກກອງທັບມາຮຸກຮານເມືອງໄຊປາການ *"ເມື່ອນັ້ນມີກະສັດອົງນຶ່ງເປັນໃຫຍ່ ເມືອງເມັງ ອັນມີທໍຣະດີຝ່າຍແມ່ນ້ຳຄົງກ້ຳວັນຕົກພຸ້ນ ກໍຍົກເອົາລີ້ພົນຂ້າມແມ່ນ້ຳຄົງມາ ມີກຳລັງລ້ານເຈັດແສນ ເພື່ອວ່າຈັກມາເອົາວຽງໄຊປາການນີ້"*

ສະມັຍຣັດຕະນະໂກສິນ ຕຳນານພື້ນເມືອງຊຽງໃໝ່ ຮຽກມອນທີ່ອົບພະຍົບຈາກເມືອງຫົງສາວະດີ ຊຶ່ງຖືກພະມ້າຍຶດເມືອງໄດ້ວ່າ "ເມັງ" ແລະເມັງບ້ານທ່າການ (ປັດຈຸບັນຢູ່ໃນເຂດອຳເພີສັນປ່າຕອງ ຈັງຫວັດຊຽງໃໝ່ ເປັນເມືອງບໍລິວານຂອງຫະຣິພຸນໄຊ) ໃນສະມັຍນັ້ນໄດ້ພາຄອບຄົວເມັງອົບພະຍົບເຂົ້າມາຊຽງໃໝ່

> ສັກກະຣາດ 1119 ຕົວ (ພ.ສ. 2300) ປີເມືອງເປົ້າ ສິກດຽວນີ້ 4 ອອກ 7 ຄ່ຳ ມ່ານແມງໂຮງແປງ ຍົກທັບເຂົ້າມາເຖິງເກາະລົມ ເມັງ ແລະ ມ່ານຮົບກັນ ຕາຍເປັນອັນມາກ ເມັງມີຄົນບໍ່ຫລາຍແຕກມ່ານເປັນຣະສ່ຳຣະສາຍ ເມັງທະລະການພາຄົນຄົວເຂົ້າເມືອງຊຽງໃໝ່

ດັ່ງນັ້ນຈະເຫັນວ່າໃນສະມັຍບູຮານຈົນເຖິງສະມັຍຣັດຕະນະໂກສິນ ຄົນລ້ານນາຮຽກຄົນມອນ ວ່າ "ເມັງ" ໜັງສືຈາມເທວີວົງທີ່ພະໂພທິຣັງສີໄດ້ລິດຈະນາ ເມື່ອປະມານ ພ.ສ. 2060 ໄດ້ກ່າວເຖິງບໍລິເວນລຸ່ມແມ່ນ້ຳປິງວ່າເປັນທີ່ຢູ່ຂອງພວກເມັງລະບຸດ ຊຶ່ງເປັນຊົນພື້ນເມືອງຂອງລຸ່ມແມ່ນ້ຳປິງ ພວກນີ້ມີຄວາມເປັນຢູ່ແບບເຜົ່າພັນ (tribal society) ມີຫລາຍຕະກຸນກະຈາຍຢູ່ໃນບໍລິເວນໃກ້ຄຽງ ແຕ່ລະຕະກຸນມີສັດເປັນສັນຍາລັກ ຄື ແຮດ ຊ້າງ ງົວ ແລະ ເນື້ອ ຕໍ່ມາລືສີວາສຸເທພຊຶ່ງເປັນຊາວຕ່າງຖິ່ນ ທີ່ຮັບເອົາວັດທະນະທັມອິນເດຽອົບພະຍົບເຂົ້າມາແຕ່ງງານກັບພວກເມັງລະບຸດ ຕະກຸນທີ່ຖືເນື້ອເປັນສັນຍາລັກ ແລະ ໄດ້ສ້າງບ້ານເມືອງຂຶ້ນຊື່ເມືອງ "ມິຄະສັງຄະຣະນະຄອນ" ແລະ *"ສມັນຕະຣະປະເທດ"* ໂດຍຄົນທີ່ນັບຖືຕະກຸນເນື້ອເປັນຊົນຊັ້ນ

ປົກຄອງ ພ້ອມກັນນີ້ສັງຄົມໄດ້ປ່ຽນຈາກສັງຄົມແບບເຜົ່າພັນ ມາເປັນສັງຄົມເມືອງ (urban society) ຕໍ່ມາເມືອງໄດ້ຖືກນໍ້າຖ້ວມ ຜູ້ຄົນລົ້ມຕາຍຈຳນວນຫລາຍ ລືສີວາສຸເທພ ຈຶ່ງສ້າງເມືອງຂຶ້ນໃໝ່ ຄືເມືອງຫະຣິພຸນໄຊ

ເມັງຄະບຸດທີ່ຂຽນໃນຈາມເທວີວົງນີ້ ພະຍາປະຊາກິດກອນຈັກ ຈິຕ ພູມສັກ ແລະອາຈານ ສຣິສັກ ວັນລິໂພດົມ ມີຄວາມເຫັນກົງກັນວ່າ ຄືເມັງ ຫລືມອນບູຮານທີ່ອາສັຍຢູ່ບໍລິເວນລຸ່ມແມ່ນໍ້າປິງ ຕໍ່ມາເມື່ອພະນາງຈາມເທວີ ໄດ້ສະເດັດຈາກລະໂວ້ໄປປົກຄອງຫະຣິພຸນໄຊ ພະນາງໄດ້ນຳເອົາວັດທະນະທັມຂອງລະໂວ້ຂຶ້ນໄປດ້ວຍ ຍັງຜົນໃຫ້ເກີດການປ່ຽນແປງໃນບໍລິເວນລຸ່ມແມ່ນໍ້າປິງ ໂດຍນຳເອົາ ພະພຸດທະສາສະໜາ ແບບຫີນະຍານ ເຂົ້າຜະສົມກັບຄວາມເຊື່ອເລື່ອງຜີຂອງພວກເມັງດັ້ງເດີມ ການເມືອງການປົກຄອງ ເປັນການປົກຄອງໂດຍສະຖາບັນກະສັດ ດ້ານສັງຄົມໄດ້ມີປະຊາຊົນຈາກລະໂວ້ອົບພະຍົບເຂົ້າມາຕັ້ງຖິ່ນຖານດ້ວຍ ສະມັຍນັ້ນ ມີພວກລະວ້າ ຫລືລົວະອາສັຍຢູ່ບໍລິເວນລຸ່ມແມ່ນໍ້າປິງນີ້ແລ້ວ ດັ່ງປະກົດໃນນິທານຊາວບ້ານ ເລື່ອງພະນາງຈາມເທວີ ແລະ ຂຸນຫລວງວິຣັງຄະ ຊຶ່ງເປັນຫົວໜ້າເຜົ່າລົວະ

ອາດຈະກ່າວໄດ້ວ່າ ໃນພຸດທະສັດຕະວັດທີ 13 ພວກເມງຄະບຸດ ຫລືເມັງ ຫລືມອນບູຮານ ບໍລິເວນລຸ່ມແມ່ນໍ້າປິງ ໄດ້ມີຄວາມສຳພັນຜະສົມຜະສານກັບຊົນກຸ່ມອື່ນ ຄືລະໂວ້ ແລະລົວະ ພ້ອມກັບພັດທະນາວັດທະນະທັມຂອງຕົນເປັນແບບຫະຣິພຸນໄຊ ໂດຍໄດ້ຮັບອິດທິພົນຈາກທວາຣະວະດີທີ່ລະໂວ້ ຫລືພາກກາງ ອານາຈັກທວາຣະວະດີນັ້ນ ເປັນອານາຈັກຂອງຄົນທີ່ເວົ້າພາສາມອນບູຮານໃນພາກກາງ ໄດ້ຂະຫຍາຍອຳນາດ ຫລືວັດທະນະທັມຂອງຕົນຂຶ້ນໄປເຖິງພວກເມັງທີ່ຫະຣິພຸນໄຊ ແລະ ຕໍ່ມາ ໄດ້ຂະຫຍາຍລົງມາເຖິງລຸ່ມແມ່ນໍ້າວັງໃນຈັງຫວັດລຳປາງດ້ວຍ

ຈາກການສຶກສາຂອງອາຈານສຣິສັກ ວັລລິໂພດົມ ກ່ຽວກັບສິລະປະສະກຸນຫະຣິພຸນໄຊ ຫລືມອນ ທີ່ພົບໃນເມືອງຫະຣິພຸນໄຊ ແລະ ເມືອງບໍລິວານຂອງຫະຣິພຸນໄຊ ໄດ້ແກ່ ວຽງເຖາະ ໃນເຂດອຳເພີຈອມທອງ ວຽງທ່າການ ຫລືຕຣະການ ໃນເຂດອຳເພີສັນປ່າຕອງ ແລະວຽງມະໂນ ໃນເຂດອຳເພີຫາງດົງ ຈັງຫວັດຊຽງໃໝ່ ພົບສິລະປະວັດຖຸ ເຊັ່ນ ພະພຸດທະຮູບ ພະພິມ ສິລາຈາລຶກພາສາມອນ ທີ່ຄືກັບທີ່ພົບໃນພາກກາງ ແລະພາກຕະວັນອອກສຽງເໜືອ ໂດຍສະເພາະສິລາຈາລຶກພາສາບູຮານທີ່ພົບນັ້ນ ມີອາຍຸຣຸ່ນຣາວຄາວດຽວກັບ ສິລາຈາລຶກທີ່ເມືອງພຸການສະມັຍພະເຈົ້າຄັນຊິຕ (Kyanzittha) ປະມານ ພ.ສ. 1628-1655 ສະແດງວ່າ ເມັງ ຫລືມອນທີ່ອາສັຍທີ່ລຸ່ມນໍ້າປິງ ລຸ່ມນໍ້າເຈົ້າພະຍາ ແລະ ພາກຕະວັນອອກສຽງເໜືອ ມີຄວາມສຳພັນກັບມອນທີ່ຢູ່ໃນພະມ້າຕອນໃຕ້

ອັນນຶ່ງ ໃນໜັງສືຈາມເທວີວົງ ໄດ້ກ່າວໄວ້ວ່າ ເມັງ ຫລືມອນທີ່ຫະຣິພຸນໄຊ ໄດ້ອົບພະຍົບໜີໂຣກຫ່າໄປອາສັຍກັບມອນເມືອງພະໂຄ ເປັນເວລາ 6 ປີ ເມັງທີ່ຫະຣິພຸນໄຊກັບມອນທີ່ພະໂຄ ໃຊ້ພາສາດຽວກັນ "ຊາວພະນະຄອນຫະຣິພຸນໄຊ ກັບຊາວພະນະຄອນຫົງສາວະດີ ມີຄວາມຄຸ້ນເຄີຍຮັກໃຄ່ກັນເປັນຢ່າງດີອັນມາກ ເຖິງພາສາຂອງຄົນທັງສອງນັ້ນກໍເວົ້າເປັນພາສາດຽວກັນ ຄຳໃດຄຳນຶ່ງຊຶ່ງຈະຕ່າງກັນໄປແດ່ກໍບໍ່ໄດ້ມີ" ຊຶ່ງອາດກ່າວໄດ້ວ່າ ເມັງ ຫລືມອນບູຮານທີ່ເມືອງຫະຣິພຸນໄຊໃນສມັຍກ່ອນ ມີຄວາມສຳພັນກັບມອນທີ່ພະມ້າຕອນໃຕ້ ພອນພັນ ເລົາຫະສີຣິບາດກ່າວວ່າ ອາຈານພີຣິຍະ ໄກຣືກ ເຊື່ອວ່າ ຖ້າຖືຕາມສີລາຈາລຶກແລ້ວ ສູນກາງຂອງມອນບູຮານຢູ່ໃນລຸ່ມແມ່ນ້ຳເຈົ້າພະຍາ ໃນລະຫວ່າງ ພຸດທະສັດຕະວັດ 12-13 ໄດ້ຕິດຕໍ່ກັບອານາຈັກອື່ນໆ ດັງປະກົດສີລະປະກຳແບບທວາຣະວະດີ ຫລືມອນ ປະກົດຢູ່ທົ່ວໄປ ແລະຕໍ່ມາສູນກາງໄດ້ຍ້າຍໄປທີ່ພະມ້າປັດຈຸບັນ ກ່ອນພຸດທະສັດຕະວັດທີ 16

ເມັງໃນສມັຍປັດຈຸບັນ ຈາກລາຍງານການສຶກສາກຸ່ມຊາດພັນ ເລື່ອງ "ເມັງ" ຂອງ ວິທູນ ບົວແດງ ແລະ ຄະນະ ພົບວ່າທ່າມກາງຄວາມຫລາກຫລາຍຂອງກຸ່ມຊາດພັນ ໃນທີ່ຣາບເຂດພາກເໜືອ ປະກອບດ້ວຍຄົນເມືອງ ລື້ ເຂີນ ຍອງ ເມັງ ນັບວ່າເປັນກຸ່ມຊາດພັນທີ່ສຳຄັນກຸ່ມນຶ່ງໃນອະດີດ ມີປະຊາກອນອາສັຍຢູ່ກະຈັດກະຈາຍ ປະປົນກັບເຜົ່າອື່ນທົ່ວພາກເໜືອ ມີຮ່ອງຮອຍຂອງການຕັ້ງຖິ່ນຖານຂອງຊົນກຸ່ມນີ້ ໂດຍສັງເກດຈາກຊື່ໝູ່ບ້ານຫລາຍແຫ່ງ ທີ່ລົງທ້າຍດ້ວຍຄຳວ່າ "ເມັງ" ເປັນຕົ້ນວ່າ ບ້ານຫ້ວຍເມັງ ຕຳບົນວຽງ ອຳເພີຊຽງຂອງ ຈັງຫວັດຊຽງຣາຍ ບ້ານສັນນາເມັງ ຕຳບົນສັນນາເມັງ ອຳເພີສັນຊາຍ ຈັງຫວັດຊຽງໃໝ່ ບ້ານນາເມັງ ບ້ານອຸເມັງ ຕຳບົນຍຸຫວ່າ ອຳເພີສັນປ່າຕອງ ຈັງຫວັດຊຽງໃໝ່ ບ້ານເມັງ ຕຳບົນເຂລາງ ອຳເພີເມືອງຈັງຫວັດລຳປາງ ໆລໆ ເປັນຕົ້ນ ນອກຈາກນີ້ ຍັງມີບ້ານຂອງຊົນຊາດເມັງ ຊຶ່ງໜ້າຈະຕັ້ງຖິ່ນຖານມາແຕ່ອະດີຕະການຮອບເມືອງລຳພູນ ຊຶ່ງເປັນສູນກາງຂອງຄວາມຈະເລີນທາງວັດທະນະທັມເມັງ ຫລືມອນໃນອະດີດ ຄືບ້ານໜອງດູ່ ແລະ ບ້ານບໍ່ຄາວ ຕຳບົນບ້ານເຮືອນ ອຳເພີປ່າຊາງ ຈັງຫວັດລຳພູນ ບ້ານໜອງຄອບແລະບ້ານກໍໂຊກ ຕຳບົນແມ່ຕ້າ ອຳເພີສັນປ່າຕອງ ຈັງຫວັດຊຽງໃໝ່ ຊຶ່ງທັງສອງໝູ່ບ້ານນີ້ ຕັ້ງຢູ່ເທິງສອງຝັ່ງແມ່ນ້ຳປິງ ປັດຈຸບັນທັງ 4 ໝູ່ບ້ານນີ້ ມີປະຊາກອນເມັງປະມານ 780 ຄອບຄົວ ຈຳນວນປະຊາກອນປະມານ 3.080 ຄົນ ຄົນເມັງເຫລົ່ານີ້ຍັງຄົງຮັກສາພາສາ ແລະ ວັດທະນະທັມ ປະເພນີຄວາມເຊື່ອຖືເລື່ອງຜີ ແລະປະເພນີຟ້ອນຜີເມັງໄວ້ ແລະ ຖືປະຕິບັດຕໍ່ມາຈົນປັດຈຸບັນ

ຜົນຈາກການສຶກສາເລື່ອງເມັງ ທີ່ມີຖິ່ນຖານໃນເຂດຈັງຫວັດຊຽງໃໝ່ ແລະ ລຳພູນໃນປັດຈຸບັນ ຈາກການສຶກສາເອກະສານ ສີລະປະກຳ ແລະ ສີລາຈາລຶກ ພໍຈະຊ່ວຍໃຫ້ຊາບເຖິງເລື່ອງລາວຂອງຊົນຊາດ

ເມັງວ່າ ເມັງໃນອະດີດ ແລະປັດຈຸບັນ ມີວັດທະນະທັມປະເພນີຫລາຍຢ່າງທີ່ໜ້າຈະສືບເນື່ອງມາຈາກອະດີດ ເປັນຕົ້ນວ່າ ພາສາ ປະເພນີການຟ້ອນຜີເມັງ ປະເພນີການບູຊາສຳເພົາ ແລະ ປະເພນີແຫ່ ພະອຸປະຄຸດ ໆລໆ ວັດທະນະທັມປະເພນີຂອງເມັງທີ່ຕົກທອດມາສູ່ຄົນເມືອງ ແລະຄົນເມັງ ໃນພາກເໜືອ ປັດຈຸບັນ ມີດັ່ງນີ້ :

1. ອັກສອນເມັງ ຫລືມອນບູຮານ ໄດ້ພັດທະນາມາສູ່ອັກສອນພື້ນເມືອງໃນພາກເໜືອ ຄືອັກສອນທັມ ຫລືຕົວເມືອງ

2. ປະຕິທິນຂອງເມັງ ໄດ້ຖືກນຳມາໃຊ້ຮ່ວມກັບປະຕິທິນຂອງລ້ານນາ ໃນການຈົດບັນທຶກ ທັງສີລາຈາລຶກ ແລະ ໃບລານ ດັ່ງຈະພົບຂໍ້ຄວາມທີ່ລະບຸວັນເມັງໄວ້ຊັດເຈນ ດັ່ງເຊັ່ນ ສີລາຈາລຶກ ວັດພະຍືນວ່າ "ແລ້ວພະມະຫາເຖຣະເຈົ້າຈິ່ງແຮກທະຄຸກບ່ອນບັນລັງພະຍືນເປັນເຈົ້ານີ້ ໃນປີລະກາ ເດືອນຍີ່ ອອກສາມຄ່ຳ ວັນໄທ ວັນກາບເສັດ ວັນເມັງ ວັນສຸກ ພານເມື່ອຈັກໃກ້ຮຸ່ງ" ຕຳນານພຶງຄະຣາຊວົງປະກອນ ກ່າວເຖິງວັນເມັງ ດັ່ງນີ້ :

> ໃນຍາມການນັ້ນ ເຈົ້າກາວິລະ ອັນໄດ້ເຖິງຖານັນດອນອັນເປັນພະຍາ ໃນສັກກຣາຊ 1144 ຕົວ ປີເຕົ່າຍີ່ ເດືອນ 12 ເພັນ ເມັງວັນ 5 ຍາມແຖ ເປັນຍາມອຸທະທັງຣາຊາມັກຄາລັງການ ໄດ້ 8 ວັນ ເດືອນ 12 ແຮມ 8 ຄ່ຳ ວັນສຸກ ເຖິງວັງສະແກງສືບນ້ຳແມ່ລີ້ທີ່ພະຍາຈ່າບ້ານຕັ້ງຢູ່ ເກົ່ານັ້ນ

3. ຜີເມັງ ເມັງນັບຖືຜີມາແຕ່ບູຮານ ດັ່ງປະກົດໃນວັນນະກັມທ້າວຮຸ່ງ ຫລືເຈືອງ ສະບັບລາວວ່າ ນາງງ້ອມລ້ຽງຜີບັນພະບຸລຸດຂອງນາງ ເຊີນຜີຂຸນຫລວງເຈົ້າເມືອງເມັງມາຮັບເຄື່ອງສັງເວີຍ ດັ່ງຂໍ້ ຄວາມວ່າ

"ຂຸນຫລວງເຈົ້າເມືອງເມັງເປັນໃຫຍ່ ມາກິນ" ປັດຈຸບັນເມັງຍັງຄົງນັບຖືຜີ ແລະ ມີປະເພນີການເສັ້ນຜີ ໂດຍການຟ້ອນຮຽກວ່າ "ຟ້ອນຜີເມັງ" ຜີເມັງທີ່ສຳຄັນມີ 3 ປະເພດ ໄດ້ແກ່

ກ. ຜີບັນພະບຸລຸດ ຫລືຜີປູ່ຍ່າເມັງ ຜີບັນພະບຸລຸດນີ້ ຕໍ່ມາຄົນເມັງຂາຍໃຫ້ຄົນເມືອງໄວ້ບູຊາ ເພື່ອຄວາມອຸດົມສົມບູນ ກາຍເປັນຜີບັນພະບຸລຸດຂອງຄົນເມືອງໄປ ຮຽກວ່າ "ຜີມົດ" ຊຶ່ງປັດຈຸບັນ ຍັງມີການຟ້ອນຜີເມັງ ແລະ ຟ້ອນຜີມົດໃນພາກເໜືອ

ຂ. ຜີເສື້ອບ້ານ ຄືຜີທີ່ຄຸ້ມຄອງໝູ່ບ້ານໃຫ້ຢູ່ເຢັນເປັນສຸກ ແລະ ປອດພັຍໃນຊີວິດ ແລະ ຊັບສິນ ຝົນຟ້າຕົກຕ້ອງຕາມລະດູການ ປັດຈຸບັນມີຫໍຜີ ແລະ ລ້ຽງຜີທຸກປີ

ຄ. ຜີປ່າ ໄດ້ແກ່ ຜີທີ່ຢູ່ນອກອານາເຂດໝູ່ບ້ານ ອາດເປັນຜີຕາຍໂຫງ ຜີວັດຮ້າງ ຜີທົ່ງນາ ໆລໆ ຜີປ່າມັກຈະທຳຮ້າຍໃຫ້ເກີດການເຈັບປ່ວຍໄດ້

4. ປະເພນີບູຊາເຮືອສຳເພົາ (ຈ້ອງເກົ້ງ) ເປັນປະເພນີທີ່ຊາວເມັງໃນພາກເໜືອຍັງຖືປະຕິບັດຢູ່ໃນວັນລອຍກະໂທງ ຊາວເມັງຈະສ້າງເຮືອຈາກໃບໝາກພ້າວ ແລ້ວບັນຈຸເຂົ້າຂອງເຄື່ອງໃຊ້ໃນເຮືອສຳເພົາ ວາງເຮືອສຳເພົາລົງໃຫ້ພະສົງສູດໃນວິຫານ ຊາວເມັງທຸກຄົນໃນໝູ່ບ້ານຈະຈຸດທຽນບູຊາເຄາະຂອງຕົນເອງ ເວລາກາງຄືນຈະແຫ່ເຮືອສຳເພົາຈາກວັດໄປປ່ອຍທີ່ທ່ານ້ຳ ເຊື່ອວ່າ ເຮືອລຳນີ້ຈະພາເຄາະຂອງຊາວເມັງທຸກຄົນອອກໄປ ຖ້າເຮືອລອຍກັບມາທີ່ເດີມ ຊາວບ້ານຈະຕ້ອງທຳພິທີສະເດາະເຄາະທັງໝູ່ບ້ານ ແລະ ຕ້ອງທຳພິທີປ່ອຍເຮືອໃໝ່ ພິທີນີ້ຄ້າຍກັບພິທີໄຫລເຮືອໄຟຂອງຊາວອີສານ ສັນນິຖານວ່າ ປະເພນີນີ້ອາດຈະມີມາແຕ່ບູຮານ ດັ່ງປະກົດໃນຕຳນານຈາມເທວີວົງວ່າ ເມື່ອເກີດໂຣກລະບາດໃນຫະຣິພຸນໄຊ ຊາວເມັງໄດ້ອົບພະຍົບໄປຢູ່ເມືອງພະມ້າ ຫົງສາວະດີ ແລ້ວໄດ້ລອຍເຂົ້າປາອາຫານລົງໃນແມ່ນ້ຳ ເພື່ອອຸທິດໃຫ້ໝູ່ຍາດທັງຫລາຍ

5. ປະເພນີແຫ່ພະອຸປະຄຸດ ເມື່ອມີງານເທດສະການສຳຄັນໃນໝູ່ບ້ານ ເຊັ່ນ ສະຫລອງວິຫານ ໂບດ ຊາວເມັງຈະເຊື່ອວ່າຕ້ອງອັນເຊີນພະອຸປະຄຸດ ຊຶ່ງມີອິດທິລິດອາສັຍຢູ່ໃຕ້ສະໝຸດ ສາມາດບັນດານໃຫ້ງານສະຫລອງຄັ້ງນັ້ນເປັນໄປດ້ວຍຄວາມຮຽບຮ້ອຍ ຈຶ່ງມີພິທີແຫ່ພະອຸປະຄຸດຈາກແມ່ນ້ຳ ໂດຍຢິບກ້ອນຫີນຂຶ້ນມາສົມມຸດວ່າເປັນພະອຸປະຄຸດ ແລ້ວສ້າງຫໍພະອຸປະຄຸດໄວ້ໃນວັດທີ່ມີງານສະຫລອງ ບາງວັດ ຈະສ້າງເປັນຫໍຖາວອນ ເຊັ່ນ ວັດໜອງຄອບ ວັດສອງແຄວ ປະເພນີແຫ່ພະອຸປະຄຸດນີ້ ຄົນເມືອງກໍມີຄວາມເຊື່ອ ແລະ ຖືເປັນປະເພນີເຊັ່ນດຽວກັບຄົນເມັງ

ສະຫລຸບໄດ້ວ່າ "ເມັງ" ເປັນຊື່ຮຽກກຸ່ມຊາດພັນກຸ່ມນຶ່ງໃນພາກເໜືອ ເຊື່ອວ່າເປັນກຸ່ມທີ່ຕັ້ງຖິ່ນຖານບໍລິເວນລຸ່ມແມ່ນ້ຳປິງມາ ກ່ອນທີ່ຈະສ້າງເມືອງຫະຣິພຸນໄຊຂຶ້ນ ໃນລະຫວ່າງພຸດທະສັດຕະວັດທີ 13 ເມັງອາດອາສັຍຮ່ວມກັບພວກລະວ້າ ຫລືລົວະ ເມື່ອພະນາງຈາມເທວີ ໄດ້ນຳເອົາຄວາມຈະເລີນຂອງມອນ ຫລືທວາຣະວະດີຈາກພາກກາງຂຶ້ນໄປທີ່ເມືອງຫະຣິພຸນໄຊ ຈາກການສຶກສາທາງດ້ານສິລະປະກັມ ບູຮານຄະດີ ສີລາຈາລຶກ ແລະ ຕຳນານ ພົບວ່າເມືອງຫະຣິພຸນໄຊ ແລະ ເມືອງບໍລິວານໃກ້ຄຽງ ມີບູຮານສະຖານ ແລະ ສິລະປະວັດຖຸ ເຊັ່ນ ເຈດີ ພະພຸດທະຮູບ ພະພິມ ໆລໆ ແລະ ສີລາຈາລຶກອັກສອນມອນ ທີ່ມີອາຍຸເກົ່າແກ່ເຖິງພຸດທະສັດຕະວັດທີ 12 ຕໍ່ມາເມັງບໍລິເວນນີ້ ຄົງໄດ້ມີຄວາມສຳພັນກັບມອນທີ່ຢູ່ຕອນໃຕ້ຂອງພະມ້າປັດຈຸບັນ

ໃນສະໄໝຣັດຕະນະໂກສິນ ເມື່ອພະມ້າຍຶດຄອງເມືອງຫົງສາວະດີໄດ້ໃນ ພ.ສ. 2306 ແລ້ວ ຍັງຜົນໃຫ້ເມັງ ຫລືມອນອົບພະຍົບເຂົ້າມາໃນພາກເໜືອ ແລະພາກກາງເປັນຈຳນວນຫລາຍ ຄົນພາກເໜືອບາງຄົນຄົງຈະໄດ້ຮັບອິດທິພົນຈາກກຸງເທພ ຈຶ່ງຮຽກເມັງທີ່ອົບພະຍົບກຸ່ມນີ້ວ່າມອນດ້ວຍ ເມັງຫລືມອນກຸ່ມນີ້ ໄດ້ເຂົ້າຜະສົມຜະສານກັບເມັງ ລົວະ ແລະຄົນເມືອງ ປັດຈຸບັນຍັງມີເມັງຫລົງເຫລືອຢູ່ຫລາຍໝູ່ບ້ານໃນພາກເໜືອໂດຍສະເພາະບໍລິເວນທີ່ຣາບລຸ່ມແມ່ນ້ຳປິງ ທີ່ຈັງຫວັດຊຽງໃໝ່ ແລະ ລຳພູນ ຊາວເມັງເຫລົ່ານີ້ຍັງຮັກສາພາສາ ວັດທະນະທັມ ຄວາມເຊື່ອ ແລະປະເພນີບາງຢ່າງຂອງຕົນ ທີ່ແຕກຕ່າງໄປຈາກກຸ່ມຊາດພັນອື່ນໄວ້ໄດ້ເໝືອນກັບຊົນຊາດລົວະ ຊຶ່ງປັດຈຸບັນ ກໍຍັງອາສັຍຢູ່ທົ່ວໄປໃນພາກເໜືອ ແລະ ຍັງຮັກສາວັດທະນະທັມ ພາສາ ແລະ ປະເພນີບາງຢ່າງຂອງຕົນໄວ້ໄດ້ເຊັ່ນກັນ ແມ່ນວ່າ ວັດທະນະທັມ ປະເພນີ ແລະ ຄວາມເຊື່ອບາງຢ່າງຈະປ່ຽນແປງໄປຕາມການເວລາ ແຕ່ກໍຍັງມີວັດທະນະທັມ ປະເພນີບາງຢ່າງຂອງຊົນຊາດເມັງ ຫລົງເຫລືອໃຫ້ໄດ້ສຶກສາຄົ້ນຄວ້າຕໍ່ໄປ

## ສະຫລຸບ

ກຸ່ມຊາດພັນທີ່ປະກົດໃນຕຳນານພະຍາເຈືອງ ມີຫລາຍຊາດພັນ ໄດ້ແກ່ ໄທຍວນ ຊຶ່ງໝາຍເຖິງ ພະຍາເຈືອງ ແລະ ຊາວເມືອງເງິນຍາງ ຊຶ່ງມີຫລັກຖານທາງບູຮານຄະດີ ແລະ ສິລະປະກຳຈຳນວນຫລາຍ ເຊັ່ນ ສິລະປະກຳສະກຸນຊ່າງຊຽງແສນ ສິລະປະສະກຸນຊ່າງພະເຢົາ ຊຶ່ງເຊື່ອວ່າ ໄດ້ຮັບອິດທິພົນມາຈາກສິລະປະແບບປາລະປະເທດອິນເດຽ ກ່ອນສມັຍພະຍາມັງຣາຍ ຊຶ່ງນິຍົມສ້າງສິລະປະວັດຖຸດ້ວຍສິລາ ດິນແດນບໍລິເວນຊຽງຣາຍ ແລະພະເຢົາ ມີຫລັກຖານທັງສິລາຈາລຶກ ແລະສິລະປະກຳທີ່ຢືນຢັນຄວາມມີຕົວຕົນຂອງຊຸມຊົນທີ່ອາສັຍລຸ່ມແມ່ນ້ຳກົກ ແມ່ນ້ຳອິງ ແລະແມ່ນ້ຳແມ່ສາຍ ຮວມໄປເຖິງສອງຝັ່ງແມ່ນ້ຳຂອງ ຊຶ່ງຕຳນານກ່າວວ່າ ເປັນອານາເຂດບ້ານເມືອງຂອງພະຍາເຈືອງ ສິ່ງເຫລົ່ານີ້ສະທ້ອນຄວາມຈະເລີນຂອງກຸ່ມຄົນໃນອະດີດ ສມັຍພະຍາເຈືອງ ກ່ອນຍຸກພະຍາມັງຣາຍ ຢ່າງຍາກທີ່ຈະປະຕິເສດໄດ້

ຊາວລົວະ ຕຳນານຮຽກວ່າ ລະ ລວ ທັມມິລລະ ແລະ ມິລັກຂຸ ເປັນອີກກຸ່ມນຶ່ງທີ່ໜ້າສົນໃຈ ເນື່ອງຈາກພົບເລື່ອງລາວຂອງລົວະ ຫລືລະວ້າ ໃນຕຳນານຂອງລ້ານນາເກືອບທຸກເລື່ອງ ໂດຍສະເພາະຢ່າງຍິ່ງ ຕຳນານພຸດທະສາສະໜາ ເຊັ່ນ ຕຳນານພະທາດຕ່າງໆ ຜູ້ແຕ່ງຕຳນານລ້ານນາ ຈະຂຽນທຳນອງຍົກຍ້ອງວ່າລົວະເປັນກຸ່ມຄົນກຸ່ມທຳອິດທີ່ມີໂອກາດໄດ້ພົບພະພຸດທະເຈົ້າ ແລະ ພວກເຂົາໄດ້ຮັບນັບຖືພະພຸດທະສາສະໜາກ່ອນພວກອື່ນ ເປັນຫຍັງຕ້ອງເປັນລົວະ ແລ້ວຊາວໄທຍວນໄປຢູ່ທີ່ໃດ ເປັນຫຍັງຜູ້ແຕ່ງຕຳນານບໍ່ກ່າວ

ຍົກຍ້ອງວ່າ ຊາວໄທຍວນໄດ້ຮັບພະທາດ ພະບາດມາຈາກພະພຸດທະເຈົ້າ ທັງນີ້ພົບຮ່ອງຮອຍຂອງການທີ່ເຊື່ອວ່າ ລົວະເປັນເຈົ້າຂອງດິນແດນບໍລິເວນນີ້ມາກ່ອນຊາວໄທຍວນ ຫລືວ່າລົວະກັບຊາວໄທຍວນ ຈະສືບເຊື້ອສາຍມາຈາກພະຍາລໍຈັກກະຣາຊດຽວກັນ ເລື່ອງນີ້ຍັງຫາຂໍ້ສະຫລູບຊັດເຈນບໍ່ໄດ້ ຕ້ອງອາສັຍການສຶກສາຄົ້ນຄວ້າຕໍ່ໄປ[30]

ສ່ວນເມັງ ຫລືມອນບູຮານນັ້ນ ເປັນກຸ່ມຊາດພັນທີ່ຜູ້ແຕ່ງຕຳນານລ້ານນາຮູ້ຈັກດີ ຊາວລ້ານນາຮຽກມອນວ່າເມັງ ພວກນີ້ມີແວ່ນແຄວ້ນຂອງຕົນເອງ ຄືແຄວ້ນຫະຣິພຸນໄຊມາແຕ່ພຸດທະສັດຕະວັດ ທີ 13 ຊຶ່ງມີຫລັກຖານທັງທາງດ້ານອັກສອນສາດ ຄື ອັກສອນມອນບູຮານ ແລະ ສິລະປະກຳຕ່າງໆ ທີ່ປະກົດຫລັກຖານຈົນເຖິງປັດຈຸບັນ

ການສຶກສາກຸ່ມຊາດພັນໃນເຂດລ້ານນາ ແລະ ປະເທດໃກ້ຄຽງນັ້ນເປັນເລື່ອງໜ້າສົນໃຈ ຈາກການສຶກສາວິຈັຍ ແລະ "ຖານຂໍ້ມູນກ່ຽວກັບຊາດພັນຈາກຄຳພີໃບລານ" ພົບວ່າໃນດິນແດນເອເຊັຽອາຄະເນພາກພື້ນທະວີບ ມີກຸ່ມຊາດພັນຕ່າງໆ ຕັ້ງແຕ່ຕອນໃຕ້ຂອງມົນທົນຢູນນານ ຫລືເມືອງຊຽງຮຸ່ງ ເມືອງໃນລ້ານນາ ແລະ ໃນ ສປປ. ລາວ ມີກຸ່ມຊາດພັນນັບໄດ້ເຖິງ 41 ກຸ່ມ ຊຶ່ງສະທ້ອນໃຫ້ເຫັນວ່າ ບໍລິເວນນີ້ມີຄົນຫລາຍກຸ່ມອາສັຍ ແລະ ມີການພົບປະສັງສັນກັນ ທັງເປັນຍາດກັນ ແລະ ເປັນສັດຕູ ຊຶ່ງຜູ້ແຕ່ງຕຳນານໄດ້ກ່າວໄວ້ຢ່າງໜ້າສົນໃຈ[31]

---

[30] ກະລຸນາເບິ່ງລາຍລະອຽດເລື່ອງລົວະໃນລ້ານນາຈາກ ອະຣຸນຣັຕ ວິຊຽນຂຽວ ລາຍງານການວິຈັຍເລື່ອງ "ລົວະໃນລ້ານນາ ສຶກສາຈາກຕຳນານ ແລະຈາລຶກ" ສະຖາບັນຣາຊພັດຊຽງໃໝ່ ສະເໜີຕໍ່ສຳນັກງານຄະນະກັມມະການວັດທະນະທັມແຫ່ງຊາດ ກຸງເທບ 2545. (ອັດສຳເນົາ ບໍ່ເຜີຍແຜ່)

[31] ກະລຸນາເບິ່ງລາຍລະອຽດເພີ່ມໃນ ເວບໄຊເລື່ອງ "ກຸ່ມຊາດພັນ ໃນດິນແດນພາກພື້ນທະວີບ: ກໍລະນີສຶກສາຈາກຄຳພີໃບລານ ແລະ ຈາລຶກ" The Center for Southeast Asian Studies, Kyoto University by Aroonrut Wichienkeeo and Prof. Hayashi Yukio. (ກຳລັງຈັດທຳເວບໄຊ)

# ບັນນານຸກົມ

ຈິດພູມສັກ ຄວາມເປັນມາຂອງຄຳສຍາມ, ໄທ ລາວ ແລະ ຂອມ ແລະ ລັກສະນະທາງສັງຄົມຂອງຊື່ຊົນຊາດ. ກຸງເທບ : ກຸງສຍາມການພິມ, 2519

ສ່ຳ ທອງຄຳວັນ (ຜູ້ອ່ານ). "ຄຳອ່ານສີລາຈາລຶກວັດພຣະຍືນ ຈັງຫວັດລຳພູນ". ວາລະສານສິລະປາກອນ, ປີທີ 1 ເຫລັ້ມທີ່ 1 : 2500

ຊານວິທຍ໌ ເກດຕຣະສີຣີ (ບັນນາທິການແປ). ນີ່ ສຽມກຸກ. ກຸງເທບ ມູນນິທິໂຄງການຕຳຣາມະນຸດສາດ ແລະ ສັງຄົມສາດ 2545

ດວງເດືອນ ບຸນຍາວົງ. ແນວຄິດ ແລະ ຣິດຄອງ ທ້າວຮຸ່ງທ້າວເຈືອງ. ກຸງເທບ ມະຕິຊົນ 2540

ທະວີ ສວ່າງປັນຍາງກູນ (ປະຣິວັດ). ຕຳນານພື້ນເມືອງສິບສອງພັນນາ. ກຸງເທບ: ມິດນະຣາການພິມ, 2529

"-----------" (ປະຣິວັດ). ຕຳນານເມືອງຊຽງຕຸງ. ກຸງເທບ : ລິຟວິ່ງການພິມ, 2529

ທອງຄຳ ອ່ອນມະນີສອນ. ພົຈນານຸກົມພາສາລາວ. ວຽງຈັນ : ໂຮງພິມວຽງຈັນ, 2535

ທະວັຊ ປຸນໂນທົກ. "ວິຈານຕຳນານພະຍາເຈືອງ" ວາລະສານມະນຸດສາດ. ປີທີ່ 11 ສະບັບທີ່ 1 (ກໍລະກະດາ-ທັນວາ 2525) ຄະນະມະນຸດສາດ ມະຫາວິທະຍາໄລຊຽງໃໝ່, ໜ້າ 132-145

"-----------" "ປຣະວັດສາດສັງຄົມ ແລະ ການເມືອງອີສານ ຈາກລຶກວັດຖ້ຳຄູຫາ ອຸດອນທານີ" ສິລະປະວັດທະນະທັມ. ປີທີ່ 6 ເຫລັ້ມທີ່ 8 : 2518

ບັນຈົບ ພັນທຸເມທາ, ກາເລພ່ານໄຕໃນຣັດຊະຊານ ກຸງເທບ : ສຳນັກພິມປະກາຍພຣຶກ, 2526

"-----------" ໄປສອບຄຳໄທ. ຈັດພິມໂດຍ ຄະນະກຳມະການໂຄງການເຜີຍແຜ່ເອກະລັກໄທ, 2522

ບຸນຍັງ ຊຸມສີ (ປະຣິວັດ). ສຸວັນໂຄມຄຳຊຽງແສນຫລວງ. ຊຽງຣາຍ : ມ.ປ.ທ, 2538. (ອັດສຳເນົາ)

ປຣະຊາກິຈກອນຈັກ, ພຍາ. ພົງສາວະດານໂຍນົກ. ກຸງເທບ ຮຸ່ງວັດທະນາ, 2515

ປຣະຄອງ ນິມມານເຫມິນທ໌, "ມະຫາກາບເລື່ອງ ທ້າວບາເຈືອງ : ການສຶກສາເຊີງວິເຄາະ" ວິທະຍານິພົນປະລິນຍາອັກສອນສາດດຸສະດີບັນດິດ ບັນດິດວິທະຍາໄລ ຈຸລາລົງກອນມະຫາວິທະຍາໄລ, 2530

"-----------". "ພຸທສາສນາ ກັບມະຫາກາບເລື່ອງ ທ້າວບາເຈືອງ ແລະຕຳນານພະຍາເຈືອງ" ໃນ ຕຳນານກຸ່ຽວກັບ ທ້າວຮຸ່ງທ້າວເຈືອງ ມິຕິທາງປະວັດສາດ ແລະວັດທະນະທັມ ໜ້າ 101-114

ປຣະເສີດ ນະ ນະຄອນ (ປະຣິວັດ). ໂຄລງນິຣາດຫະຣິພຸນໄຊ. (ສອບກັບຕົ້ນສະບັບຊຽງໃໝ່) ຊຽງໃໝ່ : ສູນໜັງສື ມະຫາວິທະຍາໄລຊຽງໃໝ່, ມ.ປ.ທ : 2516

ພອນພັນ ເລົາທະສີຣິນາດ. ຄວາມສັມພັນລະຫວ່າງມອນພະມ້າ ແລະ ສຸໂຂທັຍ ພຸທສະຕະວັດທີ່ 19-20. ວິທະຍານິພົນ ສິລະປະສາດ ມະຫາບັນດິດ ມະຫາວິທະຍາໄລສິລະປະກອນ, 2529

ໂພທິຣັງສີ, ພຣະ. ຈາມເທວີວົງ ພົງສາວະດານເມືອງຫະຣິພຸນໄຊ. ພິມແຈກໃນງານສລອງຄົບ 6 ຮອບ ຂອງນາງຈັນເມັດ ຊຸຕິມາ

ວິສຸດທິໂສທອນ, ພຣະຣາຊ. (ປະຣິວັດ) "ຕຳນານເມືອງຊຽງແສນ" ໃນເມືອງພະເຢົາ. ກຸງເທບ: ພິມເນດ, 2527

ສງວນ ໂຊຕິສຸຂຣັດ. ຕຳນານສຸວັນນະຄຳແດງ ຫລືຕຳນານອິນທະຂິດ, ກຸງເທບ ປ. ພິສນາ 2515

ສະຖາບັນໄທຄະດີສຶກສາ ມະຫາວິທະຍາໄລທັມມະສາດ. ຕຳນານກ່ຽວກັບທ້າວຮຸ່ງທ້າວເຈືອງ ມິຕິທາງປະວັດສາດ ແລະວັດທະນະທັມ. ຈັດພິມເນື່ອງໃນວະໂຣກາດສລອງພຣະຊົນມາຍຸຄົບ 72 ພັນສາ ສົມເດັດພຣະເຈົ້າພີ່ນາງເທີ ເຈົ້າຟ້າກັລຍານິວັທນາ ກົມຫຼວງນະຣາທິວາດຣາຊນະຄຣິນ 6 ພຶດສະພາ 2538

ສະຖາບັນວິຈັຍສັງຄົມ ມະຫາວິທະຍາໄລຊຽງໃໝ່. ລາຍຊື່ໜັງສືໂບຮານລ້ານນາ : ເອກະສານໄມໂຄຼຟິມ ພ.ສ. 2521-2533 ຊຽງໃໝ່, ມ.ປ.ທ, 2534. (ອັດສຳເນົາ)

ພຣະທັມວິມົນໂມລີ. ວັດສີໂຄມຄຳ ແລະພະຍາເຈືອງ. ກຸງເທບ ພິນຂະເນສ ພຣິ້ນຕິ້ງ. 25536

ສົມໝາຍ ເປຣມຈິດ (ປະຣິວັດ). ມັງຣາຍສາດ ສະບັບວັດພື້ນເງິນກອງ. ຊຽງໃໝ່ : ພາກວິຊາສັງຄົມວິທະຍາ ຄະນະສັງຄົມສາດ ມະຫາວິທະຍາໄລຊຽງໃໝ່, ມ.ປ.ທ, 2519. (ອັດສຳເນົາ)

ສຸຈິດ ວົງເທດ (ບັນນາທິການ). ທ້າວຮຸ່ງທ້າວເຈືອງ ວິຣະບຸລຸດສອງຝັ່ງຂອງ. ກຸງເທບ ມະຕິຊົນ, 2538

ຫຸມພັນ ລັດຕະນະວົງ "ວັນນະກັມເລື່ອງ ທ້າວຮຸ່ງທ້າວເຈືອງ" ໃນ ສະຖາບັນໄທຄະດີສຶກສາ ມະຫາວິທະຍາໄລທັມມະສາດ. ຕຳນານກ່ຽວກັບທ້າວຮຸ່ງທ້າວເຈືອງ ມິຕິທາງປະວັດສາດແລະວັດທະນະທັມ.ນ. 149-173

ອະຣຸນຣັຕ ວິຊຽນຂຽວ ແລະ ເດວິດ ວັຍອາດ (ປະຣິວັດ). ຕຳນານພື້ນເມືອງຊຽງໃໝ່. ຊຽງໃໝ່: ສຸຣິວົງບຸກເຊນເຕີ, 2539

"-----------" "ມະຫານິທານພະຍາເຈືອງ ສະບັບວັດເໝືອງໝໍ້ ຈັງຫວັດແພຣ່" ໃນ ສະຖາບັນໄທຄະດີສຶກສາ ມະຫາວິທະຍາໄລທັມມະສາດ. ຕຳນານກ່ຽວກັບທ້າວຮຸ່ງທ້າວເຈືອງ ມິຕິທາງປຣະວັດສາດ ແລະ ວັດທະນະທັມ. ໜ້າ 63-75

"-----------" ແລະ ສີທົນ ຄຳແປງ (ປະຣິວັດ). ຕຳນານພະຍາເຈືອງ ເຫລັ້ມ 1 ແລະ ເຫລັ້ມ 2. ຊຽງໃໝ່ ໜັງສືປະຣິວັດຈາກຄຳພີໃບລານ ຊຸດຕຳນານເມືອງ ແລະກົດໝາຍ ມ.ປ.ທ, 2524. (ອັດສຳເນົາ)

"-----------" ແລະ ລະມູລ ຈັນທນ໌ຫອມ, "ປະຊຸມກົດໝາຍຄອບຄົວ" ໃນ ລາຍງານການວິຈັຍເລື່ອງກົດໝາຍລ້ານນາ ຊຽງໃໝ່ : ມ.ປ.ທ, 2527. (ອັດສຳເນົາ)

"-----------" "ເມັງ-ຊາດ" ໃນ ສາລານຸກົມໄທ ສະບັບຣາຊບັນດິດຍະສະຖານ ຕອນ 454 ມູລນິດບັນກົດເມ່ງຈີ້, ຣາຊບັນດິດຍະສະຖານ 2535, ໜ້າ 14948-14958

ອານັນ ການຈະນະພັນ, "ຕຳນານພະຍາເຈືອງ ການສຶກສາທາງດ້ານປະຣິວັດສາດ" ໃນ ຕຳນານພະຍາເຈືອງ ໜັງສືຊຸດປະຣິວັດຈາກຄຳພີໃບລານ ຊຸດຕຳນານເມືອງ ແລະ ກົດໝາຍ. ຊຽງໃໝ່ : ມ.ປ.ທ, 2524

Suksavang Simana and Elisabeth Preisig. Kmhmu Livelihood Farming the Forest. Ministry of Information and Culture, Institute for Cultural Research, Vientiane Lao P.D.R. 1997.